ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 207 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 16.12.2016

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ)**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ( ສະບັບປັບປຸງ ປີ 2015 );
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 030/ສພຊ, ລົງວັນທີ 15 ພະຈິກ 2016 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 051/ຄປຈ, ລົງວັນທີ 6 ທັນວາ 2016.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ :**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍ ການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ປະທານປະເທດ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 030 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 15 / 11 / 16

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ການຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ)

---

ອີງຕາມມາດຕາ 53 ຂໍ້ 1 ຂອງລັດຖະທຳມະນູນ (ສະບັບປັບປຸງ ປີ 2015) ແລະ ມາດຕາ 11 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ (ສະບັບປັບປຸງປີ 2015) ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ໃນວາລະກອງປະຊຸມຕອນເຊົ້າ ຂອງວັນທີ 15 ພະຈິກ 2016.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍ ການຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 12 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 15 ພະຈິກ 2016

# ກົດໝາຍ
# ວ່າດ້ວຍ ການຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ, ວິທີການ ແລະ ມາດຕະການ ກ່ຽວກັບ ການຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນການເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ, ມະຕິຂອງ ກອງປະຊຸມສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ມະຕິຂອງ ກອງປະຊຸມສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ; ການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງ ອົງການບໍລິຫານລັດ, ອົງການໄອຍະການປະຊາຊົນ, ສານປະຊາຊົນ, ອົງການກວດສອບແຫ່ງລັດ ເພື່ອຮັບປະກັນໃຫ້ລະບົບການເມືອງມີສະຖຽນລະພາບ, ປະເທດຊາດມີຄວາມສະຫງົບ, ເສດຖະກິດ-ສັງຄົມ ມີການຂະຫຍາຍຕົວ, ສັງຄົມມີຄວາມສາມັກຄີ ປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

**ມາດຕາ 2 (ປັບປຸງ) ການຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ**

ການຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແມ່ນ ການກວດກາ, ຊອກຫາຂໍ້ມູນຫຼັກຖານ ໃນການເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ນິ

ຕິກຳລຸ່ມກົດໝາຍຂອງເປົ້າໝາຍທີ່ຖືກຕິດຕາມກວດກາ ເພື່ອສະເໜີວິທີການ ແລະ ມາດຕະການໃຫ້ອົງການທີ່ກ່ຽວຂ້ອງ ແກ້ໄຂຜົນຂອງການຕິດຕາມກວດກາ ຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 3 (ໃໝ່) ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ພະຍາດອາດຍາສິດ** ໝາຍເຖິງ ການໃຊ້ອຳນາດບັງຄັບເກີນພາລະບົດບາດ, ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

2. **ການສໍ້ລາດບັງຫຼວງ** ໝາຍເຖິງ ການຍັກຍອກຊັບ, ການສໍ້ໂກງຊັບຂອງລັດ ຫຼື ລວມໝູ່, ການໃຫ້ສິນບົນ, ການຮັບສິນບົນ, ການສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ເພື່ອເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນ;

3. **ເປົ້າໝາຍທີ່ຖືກຕິດຕາມກວດກາ** ໝາຍເຖິງ ການຈັດຕັ້ງ ແລະ ບຸກຄະລາກອນ ທີ່ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສ້າງຕັ້ງ, ເລືອກຕັ້ງ ແລະ ຮັບຮອງເອົາການສະເໜີແຕ່ງຕັ້ງ.

### ມາດຕາ 4 (ໃໝ່) ນະໂຍບາຍຂອງລັດກ່ຽວກັບວຽກງານຕິດຕາມກວດກາ

ລັດ ໃຫ້ຄວາມສຳຄັນຕໍ່ການເຄື່ອນໄຫວວຽກງານຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ດ້ວຍການເຊີດຊູບົດບາດຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ສູງຂຶ້ນ.

ລັດ ຊຸກຍູ້ບັນດາອົງການລັດ ເພີ່ມທະວີການພົວພັນ, ຮ່ວມມື ໃນການເຄື່ອນໄຫວວຽກງານຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພື່ອໃຫ້ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສາມາດປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

ລັດ ປຸກລະດົມ ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ປະຊາຊົນລາວບັນດາເຜົ່າ ແລະ ຊັ້ນຄົນຕ່າງໆ ໃຫ້ປະກອບສ່ວນ ແລະ ເຂົ້າຮ່ວມໃນການເຄື່ອນໄຫວວຽກງານຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

ລັດ ສ້າງເງື່ອນໄຂ ອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ດ້ວຍການສະໜອງງົບປະມານ, ພາຫະນະ, ອຸປະກອນ ເຂົ້າໃນການຈັດຕັ້ງ ແລະ ເຄື່ອນໄຫວວຽກງານຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

### ມາດຕາ 5 (ໃໝ່) ຫຼັກການກ່ຽວກັບວຽກງານຕິດຕາມກວດກາ

ໃນການເຄື່ອນໄຫວວຽກງານຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ດຳເນີນບົນພື້ນຖານຫຼັກການ ດັ່ງນີ້:

1. ປະຕິບັດຕາມລັດຖະທຳມະນູນ ແລະ ກົດໝາຍ ຢ່າງເຂັ້ມງວດ;

2. ມີປະຊາທິປະໄຕ, ພາວະວິໄສ ແລະ ມີຄວາມໂປ່ງໃສ;

3. ມີຄວາມຊັດເຈນ, ຍຸຕິທຳ, ທັນເວລາ ແລະ ເປີດເຜີຍ;

4. ມີສ່ວນຮ່ວມຂອງປະຊາຊົນ, ການຈັດຕັ້ງທຸກຂັ້ນ ແລະ ສື່ມວນຊົນ;

5. ບໍ່ສ້າງຄວາມຫຍຸ້ງຍາກທີ່ບໍ່ຈຳເປັນ ໃຫ້ແກ່ການເຄື່ອນໄຫວວຽກງານຂອງ ການຈັດຕັ້ງ ແລະ ບຸກຄະລາກອນ ທີ່ຖືກຕິດຕາມກວດກາ.

**ມາດຕາ 6 (ປັບປຸງ) ຄວາມສຳຄັນຂອງການຕິດຕາມກວດກາ**

ການຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ມີຄວາມສຳຄັນ ແລະ ຈຳເປັນພາວະວິໄສ ໃນການສ້າງເງື່ອນໄຂໃຫ້ປະຊາຊົນໄດ້ເຂົ້າຮ່ວມໃນການຕິດຕາມກວດກາ, ການຄຸ້ມຄອງລັດ ແລະ ການຄຸ້ມຄອງເສດຖະກິດ-ສັງຄົມ ເພື່ອໃຫ້ອຳນາດລັດ, ລັດຖະທຳມະນູນ ແລະ ກົດໝາຍ ມີຄວາມສັກສິດ, ສະກັດກັ້ນການລະເມີດກົດໝາຍ, ແກ້ໄຂປາກົດການຫຍໍ້ທໍ້ໃນສັງຄົມ ເປັນຕົ້ນ ພະຍາດອາດຍາສິດ, ການສໍ້ລາດບັງຫຼວງ, ການສວຍໃຊ້ອຳນາດ, ໜ້າທີ່ຕຳແໜ່ງ, ການເມີນເສີຍຕໍ່ໜ້າທີ່ ເຮັດໃຫ້ການຈັດຕັ້ງ ແລະ ບຸກຄະລາກອນ ຍົກສູງຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງຂອງຕົນ.

**ມາດຕາ 7 ປະເພດການຕິດຕາມກວດກາ**

ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາ ຕາມປະເພດ ຕົ້ນຕໍ ດັ່ງນີ້:

1. ຕິດຕາມກວດກາທົ່ວໄປ;

2. ຕິດຕາມກວດກາການອອກນິຕິກຳ;

3. ຕິດຕາມກວດກາການແກ້ໄຂຄຳຮ້ອງທຸກ;

4. ຕິດຕາມກວດກາສະເພາະບັນຫາໃດໜຶ່ງ, ການຈັດຕັ້ງ, ບຸກຄະລາກອນ, ຂົງເຂດ ຫຼື ບໍລິເວນໃດໜຶ່ງ.

**ມາດຕາ 8 (ປັບປຸງ) ຄວາມຮັບຜິດຊອບໃນການຕິດຕາມກວດກາ**

ກອງປະຊຸມ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ມີຄວາມຮັບຜິດຊອບໃນການຕິດຕາມກວດກາ ແລະ ລາຍງານການເຄື່ອນໄຫວວຽກງານຕິດຕາມກວດກາຂອງຕົນ ຕໍ່ຜູ້ມີສິດເລືອກຕັ້ງໃນທົ່ວປະເທດ.

ຄະນະປະຈຳ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ມີຄວາມຮັບຜິດຊອບໃນການຕິດຕາມກວດກາ ແລະ ລາຍງານການເຄື່ອນໄຫວວຽກງານຕິດຕາມກວດກາຂອງຕົນ ຕໍ່ ກອງປະຊຸມສະພາແຫ່ງຊາດ, ກອງປະຊຸມສະພາປະຊາຊົນຂັ້ນແຂວງ.

ກຳມາທິການສະພາແຫ່ງຊາດ, ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ມີຄວາມຮັບຜິດຊອບໃນການຕິດຕາມກວດກາ ແລະ ລາຍງານການເຄື່ອນໄຫວວຽກງານຕິດຕາມກວດກາຂອງຕົນ ຕໍ່ຄະນະປະຈຳສະພາແຫ່ງຊາດ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ຄະນະສະມາຊິກສະພາແຫ່ງຊາດເພດຍິງ, ໜ່ວຍສະມາຊິກສະພາປະຊາຊົນເພດຍິງຂັ້ນແຂວງ ມີຄວາມຮັບຜິດຊອບໃນການຕິດຕາມກວດກາ ແລະ ລາຍງານການເຄື່ອນໄຫວວຽກງານຕິດຕາມກວດກາຂອງຕົນ ຕໍ່ ຄະນະປະຈຳສະພາແຫ່ງຊາດ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ຄະນະຮັບຜິດຊອບວຽກງານເຂດເລືອກຕັ້ງ ມີຄວາມຮັບຜິດຊອບໃນການຕິດຕາມກວດກາ ແລະ ລາຍງານການເຄື່ອນໄຫວວຽກງານຕິດຕາມກວດກາຂອງຕົນ ຕໍ່ຄະນະປະຈຳສະພາແຫ່ງຊາດ.

ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ໜ່ວຍສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງ ເມືອງ, ເທດສະບານ, ນະຄອນ ມີຄວາມຮັບຜິດຊອບໃນການຕິດຕາມກວດກາ ແລະ ລາຍງານການເຄື່ອນໄຫວວຽກງານຕິດຕາມກວດກາຂອງຕົນ ຕໍ່ ຄະນະປະຈຳສະພາແຫ່ງຊາດ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ເຂດເລືອກຕັ້ງຂອງຕົນ.

ສະມາຊິກ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ມີຄວາມຮັບຜິດຊອບໃນການຕິດຕາມກວດກາ ແລະ ລາຍງານການເຄື່ອນໄຫວວຽກງານຕິດຕາມກວດກາຂອງຕົນ ຕໍ່ ກຳມາທິການ, ຄະນະກຳມະການ ທີ່ຕົນສັງກັດ, ຄະນະປະຈຳສະພາແຫ່ງຊາດ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ເຂດເລືອກຕັ້ງຂອງຕົນ.

**ມາດຕາ 9 (ປັບປຸງ) ການເຂົ້າຮ່ວມໃນການຕິດຕາມກວດກາ**

ແນວລາວສ້າງຊາດ, ການຈັດຕັ້ງມະຫາຊົນ, ການຈັດຕັ້ງສັງຄົມ ທຸກຂັ້ນ ແລະ ປະຊາຊົນລາວບັນດາເຜົ່າ ມີ ສິດ, ໜ້າທີ່ ແລະ ພັນທະ ເຂົ້າຮ່ວມໃນການຕິດຕາມກວດກາກອງປະຊຸມສະພາແຫ່ງຊາດ, ກອງປະຊຸມສະພາປະຊາຊົນຂັ້ນແຂວງ ແລະ ຕິດຕາມກວດກາການເຄື່ອນໄຫວຂອງການຈັດຕັ້ງຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

ເພື່ອເຮັດໃຫ້ການຕິດຕາມກວດກາ ມີ ຄວາມຊັດເຈນ, ແທດກັບຄວາມເປັນຈິງ ແລະ ມີປະສິດທິຜົນນັ້ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ອົງການກວດກາລັດ, ອົງການກວດສອບແຫ່ງລັດ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ.

**ມາດຕາ 10 ການແກ້ໄຂຜົນຂອງການຕິດຕາມກວດກາ**

ໃນການຕິດຕາມກວດກາ ຖ້າຫາກພົບເຫັນການຈັດຕັ້ງ ຫຼື ບຸກຄະລາກອນ ມີການກະທຳທີ່ເປັນການລະເມີດກົດໝາຍ, ກໍ່ຄວາມເສຍຫາຍໃຫ້ແກ່ປະເທດຊາດ, ລວມໝູ່ ຫຼື ສິດ, ຜົນປະໂຫຍດອັນຊອບທຳຂອງພົນລະເມືອງນັ້ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ສະເໜີວິທີການ ແລະ ມາດຕະການໃຫ້ການຈັດຕັ້ງ ຫຼື ບຸກຄະລາກອນທີ່ກ່ຽວຂ້ອງແກ້ໄຂຜົນຂອງການຕິດຕາມກວດກາ ຕາມກົດໝາຍ.

**ມາດຕາ 11 (ໃໝ່) ການຮ່ວມມືສາກົນ**

ລັດສົ່ງເສີມໃຫ້ມີການພົວພັນ ແລະ ຮ່ວມມື ກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຕິດຕາມກວດກາ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ປະສົບການ, ຝຶກອົບຮົມ, ຍົກລະດັບຄວາມຮູ້, ຄວາມສາມາດດ້ານວິຊາການ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີປະສິດທິພາບ, ປະສິດທິຜົນ ແລະ ທັນສະໄໝ.

## ພາກທີ II
## ການຕິດຕາມກວດກາຂອງສະພາແຫ່ງຊາດ

**ມາດຕາ 12 (ໃໝ່) ການຕິດຕາມກວດກາຂອງສະພາແຫ່ງຊາດ**

ສະພາແຫ່ງຊາດ ດຳເນີນການຕິດຕາມກວດກາ ໂດຍ:

1. ກອງປະຊຸມສະພາແຫ່ງຊາດ;
2. ຄະນະປະຈຳສະພາແຫ່ງຊາດ;
3. ກຳມາທິການ ສະພາແຫ່ງຊາດ;
4. ກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ;
5. ສະມາຊິກສະພາແຫ່ງຊາດ.

## ໝວດທີ 1
## ການຕິດຕາມກວດກາຂອງກອງປະຊຸມສະພາແຫ່ງຊາດ

**ມາດຕາ 13 (ໃໝ່) ການຕິດຕາມກວດກາຂອງກອງປະຊຸມສະພາແຫ່ງຊາດ**

ສະພາແຫ່ງຊາດ ຕິດຕາມກວດກາ ໂດຍຜ່ານກອງປະຊຸມຂອງຕົນ ບົນພື້ນຖານການເຄື່ອນໄຫວຕິດຕາມກວດກາຂອງ ຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການ, ຄະນະສະມາຊິກສະພາແຫ່ງຊາດເພດຍິງ, ຄະນະຮັບຜິດຊອບວຽກງານເຂດເລືອກຕັ້ງ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ.

**ມາດຕາ 14 (ໃໝ່) ເປົ້າໝາຍ ທີ່ຖືກຕິດຕາມກວດກາຂອງກອງປະຊຸມສະພາແຫ່ງຊາດ**

ກອງປະຊຸມສະພາແຫ່ງຊາດ ຕິດຕາມກວດກາເປົ້າໝາຍ ດັ່ງນີ້:

1. ປະທານ ແລະ ຮອງປະທານປະເທດ;
2. ປະທານສະພາແຫ່ງຊາດ;
3. ຮອງປະທານ ແລະ ກຳມະການຄະນະປະຈຳ ສະພາແຫ່ງຊາດ;

4. ປະທານ, ຮອງປະທານ ກຳມາທິການ ແລະ ເລຂາທິການ ສະພາແຫ່ງຊາດ;

5. ນາຍົກລັດຖະມົນຕີ;

6. ຮອງນາຍົກລັດຖະມົນຕີ;

7. ສະມາຊິກລັດຖະບານ;

8. ຫົວໜ້າອົງການໄອຍະການປະຊາຊົນສູງສຸດ;

9. ປະທານສານປະຊາຊົນສູງສຸດ;

10. ປະທານອົງການກວດສອບແຫ່ງລັດ.

**ມາດຕາ 15 ແຜນການຕິດຕາມກວດກາຂອງສະພາແຫ່ງຊາດ**

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ສ້າງແຜນການຕິດຕາມກວດກາຂອງສະພາແຫ່ງຊາດ ແລ້ວສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ເພື່ອພິຈາລະນາຮັບຮອງເອົາ. ໃນກໍລະນີຈຳເປັນຈະດຳເນີນການຕິດຕາມກວດການອກແຜນການກໍໄດ້ ຕາມການຕົກລົງຂອງ ຄະນະປະຈຳສະພາແຫ່ງຊາດ ແລ້ວລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ ເທື່ອຖັດໄປ.

**ມາດຕາ 16 (ປັບປຸງ) ເນື້ອໃນການຕິດຕາມກວດກາ ຂອງກອງປະຊຸມສະພາແຫ່ງຊາດ**

ກອງປະຊຸມສະພາແຫ່ງຊາດ ເຄື່ອນໄຫວຕິດຕາມກວດກາ ຕາມເນື້ອໃນຕົ້ນຕໍ ດັ່ງນີ້:

1. ບົດລາຍງານຂອງປະທານປະເທດ, ຄະນະປະຈຳສະພາແຫ່ງຊາດ, ລັດຖະບານ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ ແລະ ປະທານອົງການກວດສອບແຫ່ງລັດ;

2. ນິຕິກຳຂອງ ບັນດາເປົ້າໝາຍທີ່ຖືກຕິດຕາມກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງກົດໝາຍສະບັບນີ້ ທີ່ເຫັນວ່າຂັດກັບລັດຖະທຳມະນູນ, ກົດໝາຍ ຫຼື ມະຕິຂອງກອງປະຊຸມສະພາແຫ່ງຊາດ ຍົກເວັ້ນຄຳຕົກລົງ ກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;

3. ການຕອບຄຳຊັກຖາມຂອງບັນດາເປົ້າໝາຍທີ່ຖືກຕິດຕາມກວດກາ;

4. ການແກ້ໄຂຄຳຮ້ອງຂໍຄວາມເປັນທຳ;

5. ບົດລາຍງານຂອງຄະນະກຳມະການກວດກາຊົ່ວຄາວ.

**ມາດຕາ 17 (ປັບປຸງ) ການຕິດຕາມກວດກາບົດລາຍງານຂອງກອງປະຊຸມສະພາແຫ່ງຊາດ**

ໃນກອງປະຊຸມສະໄໝສາມັນ ເທື່ອທີໜຶ່ງ ສະພາແຫ່ງຊາດ ຕິດຕາມກວດກາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດປະຈຳປີ ແລະ ທິດທາງແຜນການພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດໃນປີຕໍ່ໄປ; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານປະຈຳປີຜ່ານມາ ແລະ

ທິດທາງວຽກງານປະຈຳປີຕໍ່ໜ້າຂອງ ຄະນະປະຈຳສະພາແຫ່ງຊາດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ,ປະທານສານປະຊາຊົນສູງສຸດ,ປະທານອົງການກວດສອບແຫ່ງລັດ.

ໃນກອງປະຊຸມສະໄໝສາມັນ ເທື່ອທີສອງ ສະພາແຫ່ງຊາດ ຕິດຕາມກວດກາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ທຶກເດືອນຕົ້ນປີ ແລະ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ທຶກເດືອນທ້າຍປີ; ການດັດແກ້ແຜນງົບປະມານແຫ່ງລັດ ທຶກເດືອນທ້າຍປີຖ້າມີ; ບົດລາຍງານຂອງປະທານອົງການກວດສອບແຫ່ງລັດ ກ່ຽວກັບຜົນຂອງການກວດສອບບົດສະຫຼຸບຂາດຕົວ ໃນການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ ແລະ/ຫຼື ການຈັດຕັ້ງປະຕິບັດວຽກງານໃດໜຶ່ງ; ບົດລາຍງານຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ ໃນການຈັດຕັ້ງປະຕິບັດວຽກງານໃດໜຶ່ງ; ບົດລາຍງານການປະຕິບັດວຽກງານຂອງຄະນະປະຈຳສະພາແຫ່ງຊາດ ໃນລະຫວ່າງສອງກອງປະຊຸມສະພາແຫ່ງຊາດ.

ໃນກອງປະຊຸມສະໄໝສາມັນທ້າຍອາຍຸການຂອງສະພາແຫ່ງຊາດ ຕິດຕາມກວດກາບົດລາຍງານການເຄື່ອນໄຫວວຽກງານ ຕະຫຼອດອາຍຸການຂອງປະທານປະເທດ, ຄະນະປະຈຳສະພາແຫ່ງຊາດ, ນາຍົກລັດຖະມົນຕີ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ ແລະ ປະທານອົງການກວດສອບແຫ່ງລັດ.

ບົດລາຍງານທີ່ໄດ້ກຳນົດໄວ້ໃນມາດຕານີ້ ຕ້ອງໄດ້ຜ່ານການຄົ້ນຄວ້າ, ພິຈາລະນາຂອງ ກຳມາທິການທີ່ກ່ຽວຂ້ອງ ຕາມການມອບໝາຍຂອງຄະນະປະຈຳສະພາແຫ່ງຊາດ ຍົກເວັ້ນ ບົດລາຍງານຂອງປະທານປະເທດ ແລະ ຄະນະປະຈຳສະພາແຫ່ງຊາດ ໃນກອງປະຊຸມສະໄໝສາມັນທ້າຍອາຍຸການຂອງສະພາແຫ່ງຊາດ.

ກອງປະຊຸມສະພາແຫ່ງຊາດ ຕິດຕາມກວດກາ ບົດລາຍງານຕາມຂັ້ນຕອນ ດັ່ງນີ້:

1. ປະທານປະເທດ, ຄະນະປະຈຳສະພາແຫ່ງຊາດ, ລັດຖະບານ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ ແລະ ປະທານອົງການກວດສອບແຫ່ງລັດລາຍງານ;

2. ປະທານກຳມາທິການຂອງສະພາແຫ່ງຊາດ ທີ່ຖືກມອບໝາຍປະກອບຄຳເຫັນຕໍ່ ບົດລາຍງານດັ່ງກ່າວ;

3. ສະມາຊິກສະພາແຫ່ງຊາດ ຄົ້ນຄວ້າ, ປະກອບຄຳເຫັນ, ອາດຊັກຖາມຕໍ່ການລາຍງານ; ຜູ້ລາຍງານ ໃຫ້ຄຳຊີ້ແຈງ, ຕອບຄຳຊັກຖາມ;

4. ກອງປະຊຸມສະພາແຫ່ງຊາດ ອາດສະເໜີໃຫ້ບຸກຄະລາກອນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງກົດໝາຍສະບັບນີ້ ມາໃຫ້ຄວາມກະຈ່າງແຈ້ງກ່ຽວກັບບັນຫາໃດໜຶ່ງສະເພາະ ເມື່ອເຫັນວ່າມີຄວາມຈຳເປັນ;

5. ກອງປະຊຸມສະພາແຫ່ງຊາດ ໃຫ້ຄະແນນຕໍ່ ເນື້ອໃນບົດລາຍງານ ແລະ ບຸກຄົນທີ່ມາໃຫ້ຄວາມກະຈ່າງແຈ້ງ, ຕອບຄຳຊັກຖາມ ຂອງກອງປະຊຸມ.

**ມາດຕາ 18 ການຕິດຕາມກວດການິຕິກຳ ຂອງກອງປະຊຸມສະພາແຫ່ງຊາດ**

ກອງປະຊຸມສະພາແຫ່ງຊາດ ຕິດຕາມກວດການິຕິກຳຂອງ ປະທານປະເທດ, ຄະນະປະຈຳສະພາແຫ່ງຊາດ, ລັດຖະບານ, ນາຍົກລັດຖະມົນຕີ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ ແລະ ປະທານອົງການກວດສອບແຫ່ງລັດ ທີ່ຂັດກັບລັດຖະທຳມະນູນ, ກົດໝາຍ ຫຼື ມະຕິຂອງກອງປະຊຸມສະພາແຫ່ງຊາດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ຫຼື ມີການສະເໜີຢ່າງໜ້ອຍ ໜຶ່ງສ່ວນສີ່ ຂອງຈຳນວນສະມາຊິກສະພາແຫ່ງຊາດທັງໝົດ.

ກອງປະຊຸມສະພາແຫ່ງຊາດ ຕິດຕາມກວດການິຕິກຳ ຕາມຂັ້ນຕອນ ດັ່ງນີ້:

1. ປະທານຄະນະປະຈຳສະພາແຫ່ງຊາດ ລາຍງານ;
2. ສະມາຊິກສະພາແຫ່ງຊາດ ຄົ້ນຄວ້າ, ປະກອບຄຳເຫັນ;
3. ຜູ້ອອກນິຕິກຳ ຊີ້ແຈງ, ອະທິບາຍ;
4. ລົງມະຕິຮັບຮອງເອົາການຍົກເລີກບາງສ່ວນ ຫຼື ທັງໝົດນິຕິກຳນັ້ນ.

**ມາດຕາ 19 ການຊັກຖາມ ແລະ ການຕອບຄຳຊັກຖາມໃນກອງປະຊຸມສະພາແຫ່ງຊາດ**

ໃນກອງປະຊຸມສະພາແຫ່ງຊາດການຊັກຖາມ ແລະ ການຕອບຄຳຊັກຖາມໃຫ້ປະຕິບັດດັ່ງນີ້:

ກ. ການຊັກຖາມ:

1. ຄະນະປະຈຳສະພາແຫ່ງຊາດ ສົ່ງຄຳຊັກຖາມ ໃຫ້ເປົ້າໝາຍທີ່ຖືກຊັກຖາມ ກ່ອນການດຳເນີນກອງປະຊຸມ;
2. ສະມາຊິກສະພາແຫ່ງຊາດ ຊັກຖາມຢູ່ກອງປະຊຸມ.

ຂ. ການຕອບຄຳຊັກຖາມ:

1. ຜູ້ຖືກຊັກຖາມ ຕອບຄຳຊັກຖາມ ຕາມຄຳຊັກຖາມ ທີ່ຄະນະປະຈຳສະພາແຫ່ງຊາດ ສົ່ງໃຫ້;
2. ຕອບຄຳຊັກຖາມ ທີ່ສະມາຊິກສະພາແຫ່ງຊາດ ຊັກຖາມຕື່ມ;
3. ການຕອບຄຳຊັກຖາມ ຕ້ອງຕອບໃຫ້ຖືກຕ້ອງ, ຊັດເຈນ ຕາມຄຳຊັກຖາມ.

ຫຼັງຈາກຟັງການຕອບຄຳຊັກຖາມແລ້ວ ຖ້າສະມາຊິກສະພາແຫ່ງຊາດ ຫາກບໍ່ເຫັນດີນຳຄຳຕອບນັ້ນ ກໍສະເໜີໃຫ້ຜູ້ຖືກຊັກຖາມ ຊີ້ແຈງຕໍ່ກອງປະຊຸມຕື່ມ ຖ້າເຫັນວ່າຈຳເປັນກໍສະເໜີໃຫ້ກອງປະຊຸມລົງມະຕິຕໍ່ການຕອບຄຳຊັກຖາມດັ່ງກ່າວ.

**ມາດຕາ 20 ການຕິດຕາມກວດກາ ການແກ້ໄຂຄຳຮ້ອງທຸກ**

ກອງປະຊຸມສະພາແຫ່ງຊາດ ຕິດຕາມກວດກາ ການແກ້ໄຂຄຳຮ້ອງທຸກຂອງພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໂດຍຄະນະປະຈຳສະພາແຫ່ງຊາດ, ລັດຖະບານ, ອົງການໄອຍະການປະຊາຊົນສູງສຸດ ແລະ ສານປະຊາຊົນສູງສຸດ.

ກອງປະຊຸມສະພາແຫ່ງຊາດ ຕິດຕາມກວດກາການແກ້ໄຂຄຳຮ້ອງທຸກ ຕາມຂັ້ນຕອນ ດັ່ງນີ້:

1. ຄະນະປະຈຳສະພາແຫ່ງຊາດ ລາຍງານ;

2. ສະມາຊິກສະພາແຫ່ງຊາດ ຄົ້ນຄວ້າ, ປະກອບຄຳເຫັນ;

3. ຄະນະປະຈຳສະພາແຫ່ງຊາດ ຊີ້ແຈງ, ອະທິບາຍ;

4. ລົງມະຕິຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 21 ການແຕ່ງຕັ້ງຄະນະກຳມະການຊົ່ວຄາວ**

ປະທານສະພາແຫ່ງຊາດ ແຕ່ງຕັ້ງຄະນະກຳມະການຊົ່ວຄາວຂອງສະພາແຫ່ງຊາດ ຕາມການຕົກລົງຂອງກອງປະຊຸມສະພາແຫ່ງຊາດ ເພື່ອຕິດຕາມກວດກາລະອຽດ ກ່ຽວກັບບັນຫາໃດໜຶ່ງທີ່ເຫັນວ່າມີຄວາມຈຳເປັນ ຕາມການສະເໜີຂອງ ຄະນະປະຈຳສະພາແຫ່ງຊາດ, ກຳມາທິການຂອງສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ, ນາຍົກລັດຖະມົນຕີ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ.

ຄະນະກຳມະການຊົ່ວຄາວ ປະກອບດ້ວຍ ສະມາຊິກສະພາແຫ່ງຊາດ ແລະ ພະນັກງານ, ລັດຖະກອນ ທີ່ກ່ຽວຂ້ອງຈຳນວນໜຶ່ງ ຊຶ່ງມີສິດ ແລະ ໜ້າທີ່ດັ່ງດຽວກັນກັບຄະນະສະເພາະກິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 31 ຂອງກົດໝາຍສະບັບນີ້. ຄະນະດັ່ງກ່າວຈະຖືກຍຸບເລີກໄປໃນຕົວ ພາຍຫຼັງທີ່ໄດ້ສຳເລັດການປະຕິບັດໜ້າທີ່.

ມະຕິແຕ່ງຕັ້ງຄະນະກຳມະການຊົ່ວຄາວ ຕ້ອງສົ່ງໃຫ້ການຈັດຕັ້ງ ຫຼື ບຸກຄະລາກອນ ທີ່ຖືກຕິດຕາມກວດກາ ແລະ ອົງການທີ່ກ່ຽວຂ້ອງ ເຈັດວັນ ກ່ອນຈະດຳເນີນການຕິດຕາມກວດກາ.

**ມາດຕາ 22 ການພິຈາລະນາບົດລາຍງານ ຂອງຄະນະກຳມະການຊົ່ວຄາວ**

ກອງປະຊຸມສະພາແຫ່ງຊາດ ພິຈາລະນາບົດລາຍງານ ຜົນການຕິດຕາມກວດກາ ຂອງຄະນະກຳມະການຊົ່ວຄາວ ຕາມຂັ້ນຕອນ ດັ່ງນີ້:

1. ຫົວໜ້າຄະນະກຳມະການຊົ່ວຄາວ ລາຍງານຜົນຂອງການຕິດຕາມກວດກາ;
2. ການຈັດຕັ້ງ ຫຼື ບຸກຄະລາກອນ ທີ່ຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍ;
3. ສະມາຊິກສະພາແຫ່ງຊາດ ຄົ້ນຄວ້າ, ປະກອບຄຳເຫັນ;
4. ການຈັດຕັ້ງ ຫຼື ບຸກຄະລາກອນ ທີ່ຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍ ເພີ່ມເຕີມ;
5. ລົງມະຕິຮັບຮອງເອົາຜົນຂອງການຕິດຕາມກວດກາ.

**ມາດຕາ 23 (ປັບປຸງ) ການໃຫ້ຄະແນນ, ການລົງມະຕິບໍ່ໄວ້ວາງໃຈ, ການປົດຕຳແໜ່ງ**

ການໃຫ້ຄະແນນ, ການລົງມະຕິບໍ່ໄວ້ວາງໃຈ, ການປົດຕຳແໜ່ງ ມີ ດັ່ງນີ້:

ກ. ການໃຫ້ຄະແນນ

ການໃຫ້ຄະແນນ ແມ່ນ ການປະເມີນຜົນໃນການປະຕິບັດໜ້າທີ່ວຽກງານ ໃນແຕ່ລະປີ ຕໍ່ບຸກຄະລາກອນ ທີ່ສະພາແຫ່ງຊາດ ເລືອກຕັ້ງ ຫຼື ຮັບຮອງເອົາການສະເໜີແຕ່ງຕັ້ງ ໂດຍສະມາຊິກສະພາແຫ່ງຊາດ.

ການໃຫ້ຄະແນນ ໃຫ້ປະຕິບັດ ດັ່ງນີ້:

1. ປິດລັບ, ໂດຍກົງ;

2. ພາວະວິໄສ, ຍຸຕິທຳ, ບໍ່ອະຄະຕິ;

3. ເປັນ ຫ້າ ລະດັບ ຄື ດີຫຼາຍ, ດີ, ກາງ, ອ່ອນ, ອ່ອນຫຼາຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ;

4. ສະຫຼຸບ ສັງລວມຄະແນນ, ສົ່ງໃຫ້ບຸກຄະລາກອນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງ.

ຂ. ການລົງມະຕິບໍ່ໄວ້ວາງໃຈ

ການລົງມະຕິບໍ່ໄວ້ວາງໃຈ ແມ່ນ ການລົງຄະແນນສຽງ ຂອງສະມາຊິກສະພາແຫ່ງຊາດ ຕໍ່ສະມາຊິກລັດຖະບານທ່ານໃດໜຶ່ງ ຫຼື ທັງໝົດຄະນະ ທີ່ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຕໍ່ຜົນປະໂຫຍດຂອງປະເທດຊາດ ແລະ ປະຊາຊົນ ຕາມການສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ຫຼື ຢ່າງໜ້ອຍ ໜຶ່ງສ່ວນສີ່ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທັງໝົດເປັນ ຜູ້ສະເໜີ.

ການລົງມະຕິບໍ່ໄວ້ວາງໃຈ ໃຫ້ປະຕິບັດ ດັ່ງນີ້:

1. ຄະນະປະຈຳສະພາແຫ່ງຊາດ ສະເໜີເຫດຜົນ;

2. ສະມາຊິກສະພາແຫ່ງຊາດ ຄົ້ນຄວ້າ, ປະກອບຄຳເຫັນ;

3. ເປົ້າໝາຍທີ່ຖືກສະເໜີ ຊີ້ແຈງ, ອະທິບາຍ;

4. ສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ ລົງມະຕິ.

ຄ. ການປົດຕຳແໜ່ງ

ການປົດຕຳແໜ່ງ ແມ່ນ ການລົງຄະແນນສຽງ ຂອງສະມາຊິກສະພາແຫ່ງຊາດ ຕໍ່ບຸກຄະລາກອນ ທີ່ສະພາແຫ່ງຊາດ ເລືອກຕັ້ງ ຫຼື ຮັບຮອງເອົາການສະເໜີແຕ່ງຕັ້ງ ທີ່ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຕໍ່ຜົນປະໂຫຍດຂອງປະເທດຊາດ ແລະ ປະຊາຊົນ ຕາມການສະເໜີຂອງຜູ້ທີ່ສະເໜີໃຫ້ສະພາແຫ່ງຊາດ ເລືອກຕັ້ງ ຫຼື ຮັບຮອງເອົາການສະເໜີແຕ່ງຕັ້ງ.

ການປົດຕຳແໜ່ງ ໃຫ້ປະຕິບັດ ດັ່ງນີ້:

1. ຜູ້ທີ່ສະເໜີໃຫ້ສະພາແຫ່ງຊາດ ເລືອກຕັ້ງ ຫຼື ຮັບຮອງເອົາການສະເໜີແຕ່ງຕັ້ງ ສະເໜີເຫດຜົນ;

2. ສະມາຊິກສະພາແຫ່ງຊາດ ຄົ້ນຄວ້າ, ປະກອບຄຳເຫັນ;

3. ເປົ້າໝາຍທີ່ຖືກສະເໜີ ຊີ້ແຈງ, ອະທິບາຍ;

4. ສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ ລົງຄະແນນສຽງ.

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ກຳນົດລະບຽບການກ່ຽວກັບການໃຫ້ຄະແນນ, ການລົງມະຕິບໍ່ໄວ້ວາງໃຈ, ການປົດຕຳແໜ່ງ.

## ໝວດທີ 2
## ການຕິດຕາມກວດກາຂອງຄະນະປະຈຳສະພາແຫ່ງຊາດ

**ມາດຕາ 24 (ໃໝ່) ເປົ້າໝາຍ ທີ່ຖືກຕິດຕາມກວດກາ ຂອງຄະນະປະຈຳສະພາແຫ່ງຊາດ**

ຄະນະປະຈຳສະພາແຫ່ງຊາດ ຕິດຕາມກວດກາ ເປົ້າໝາຍ ດັ່ງນີ້:

1. ລັດຖະບານ;
2. ນາຍົກລັດຖະມົນຕີ;
3. ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ແລະ ຫົວໜ້າອົງການລັດທຽບເທົ່າກະຊວງ;
4. ຫົວໜ້າ, ຮອງຫົວໜ້າ ອົງການໄອຍະການປະຊາຊົນສູງສຸດ;
5. ປະທານ, ຮອງປະທານສານປະຊາຊົນສູງສຸດ, ປະທານ, ຮອງປະທານສານປະຊາຊົນພາກ;
6. ສະມາຊິກສະພາຜູ້ພິພາກສາ ແລະ ຜູ້ພິພາກສາ ຂອງສານປະຊາຊົນ;
7. ປະທານ, ຮອງປະທານ ອົງການກວດສອບແຫ່ງລັດ, ອົງການກວດສອບປະຈຳພາກ;
8. ປະທານ, ຮອງປະທານ ກຳມາທິການ, ເລຂາທິການ, ຮອງເລຂາທິການ ສະພາແຫ່ງຊາດ;
9. ປະທານ, ຮອງປະທານ ຄະນະສະມາຊິກສະພາແຫ່ງຊາດເພດຍິງ;
10. ຫົວໜ້າ, ຮອງຫົວໜ້າ ຄະນະຮັບຜິດຊອບວຽກງານເຂດເລືອກຕັ້ງ;
11. ປະທານ, ຮອງປະທານ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ.

**ມາດຕາ 25 (ປັບປຸງ) ເນື້ອໃນການຕິດຕາມກວດກາ ຂອງຄະນະປະຈຳສະພາແຫ່ງຊາດ**

ຄະນະປະຈຳສະພາແຫ່ງຊາດ ຕິດຕາມກວດກາ ຕາມເນື້ອໃນຕົ້ນຕໍ ດັ່ງນີ້:

1. ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດ ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ໂຄງການຂອງລັດຖະບານ, ການເຄື່ອນໄຫວຂອງ ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ;

2. ນິຕິກຳຂອງ ບັນດາເປົ້າໝາຍທີ່ຖືກຕິດຕາມກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້ ທີ່ເຫັນວ່າຂັດກັບລັດຖະທຳມະນູນ, ກົດໝາຍ ຫຼື ມະຕິຂອງກອງປະຊຸມສະພາແຫ່ງຊາດ ຍົກເວັ້ນຄຳຕັດສິນ ກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;

3. ການໃຫ້ຄວາມກະຈ່າງແຈ້ງຂອງ ເປົ້າໝາຍທີ່ຖືກຕິດຕາມກວດກາ;

4. ບົດລາຍງານການຕິດຕາມກວດກາຂອງ ກຳມາທິການສະພາແຫ່ງຊາດ ແລະ ສະມາຊິກສະພາແຫ່ງຊາດ;

5. ບົດລາຍງານການແກ້ໄຂຄຳຮ້ອງທຸກ;

6. ບົດລາຍງານບັນຫາໃດໜຶ່ງຂອງຄະນະສະເພາະກິດ.

**ມາດຕາ 26 ການສ້າງແຜນການຕິດຕາມກວດກາ**

ຄະນະປະຈຳສະພາແຫ່ງຊາດ ສ້າງແຜນການຕິດຕາມກວດກາ ປະຈຳທຶກເດືອນ ແລະ ປະຈຳປີ ໂດຍອີງຕາມແຜນການຕິດຕາມກວດກາຂອງກອງປະຊຸມສະພາແຫ່ງຊາດ ແລະ ຕາມການສະເໜີຂອງກຳມາທິການສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ, ສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ. ຫຼັງຈາກແຜນການໄດ້ຖືກຮັບຮອງເອົາແລ້ວ ຄະນະປະຈຳສະພາແຫ່ງຊາດ ແບ່ງຄວາມຮັບຜິດຊອບໃຫ້ກຳມະການຄະນະປະຈຳສະພາແຫ່ງຊາດ, ກຳມາທິການສະພາແຫ່ງຊາດ ເພື່ອຈັດຕັ້ງປະຕິບັດ ແລ້ວລາຍງານໃຫ້ຄະນະປະຈຳສະພາແຫ່ງຊາດ ເພື່ອມີວິທີການ ແລະ ມາດຕະການແກ້ໄຂຢ່າງເໝາະສົມ ແລະ ທັນເວລາ.

**ມາດຕາ 27 (ປັບປຸງ) ການຕິດຕາມກວດກາບົດລາຍງານ ຂອງກອງປະຊຸມຄະນະປະຈຳສະພາແຫ່ງຊາດ**

ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຕິດຕາມກວດກາບົດລາຍງານຂອງເປົ້າໝາຍທີ່ຖືກຕິດຕາມກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້ ຖ້າເຫັນວ່າມີຄວາມຈຳເປັນ ກໍເຊີນການຈັດຕັ້ງ ຫຼື ບຸກຄະລາກອນດັ່ງກ່າວ ມາໃຫ້ຄວາມກະຈ່າງແຈ້ງຕື່ມອີກ.

ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຕິດຕາມກວດກາບົດລາຍງານ ຕາມຂັ້ນຕອນ ດັ່ງນີ້:

1. ການຈັດຕັ້ງ ຫຼື ບຸກຄະລາກອນ ທີ່ກ່ຽວຂ້ອງ ລາຍງານ;
2. ປະທານກຳມາທິການຂອງສະພາແຫ່ງຊາດ ທີ່ຖືກມອບໝາຍ ມີຄຳເຫັນ;
3. ຄະນະປະຈຳສະພາແຫ່ງຊາດ ຄົ້ນຄວ້າ, ປະກອບຄຳເຫັນ;
4. ຜູ້ລາຍງານ ຊີ້ແຈງ, ອະທິບາຍ;
5. ລົງມະຕິຮັບຮອງເອົາບົດລາຍງານ.

**ມາດຕາ 28 (ປັບປຸງ) ການຕິດຕາມກວດການິຕິກຳ**

ຄະນະປະຈຳສະພາແຫ່ງຊາດ ຊຸກຍູ້ໃຫ້ລັດຖະບານ, ນາຍົກລັດຖະມົນຕີ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ ແລະ ປະທານອົງການກວດສອບແຫ່ງລັດ ອອກນິຕິກຳເພື່ອຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ໃຫ້ທັນເວລາ ແລະ ຕິດຕາມກວດກາ, ພິຈາລະນານິຕິກຳດັ່ງກ່າວ. ກ່ອນຈະພິຈາລະນາ ຄະນະປະຈຳສະພາແຫ່ງຊາດ ມອບນິຕິກຳນັ້ນໃຫ້ກຳມາທິການສະພາແຫ່ງຊາດທີ່ກ່ຽວຂ້ອງ ຄົ້ນຄວ້າ, ກະກຽມປະກອບຄຳເຫັນເສຍກ່ອນ.

ຄະນະປະຈຳສະພາແຫ່ງຊາດ ສະເໜີໃຫ້ໂຈະການຈັດຕັ້ງປະຕິບັດນິຕິກຳຂອງອົງການລັດທີ່ຂັດກັບລັດຖະທຳມະນູນ, ກົດໝາຍ ຫຼື ມະຕິຂອງກອງປະຊຸມສະພາແຫ່ງຊາດ ແລ້ວນຳສະເໜີຕໍ່ກອງປະ

ຊຸມສະພາແຫ່ງຊາດ ພິຈາລະນາ ຍົກເວັ້ນຄໍາຕັດສິນ ກ່ຽວກັບການດໍາເນີນຄະດີຂອງ ອົງການໄອຍະການ ປະຊາຊົນ ແລະ ສານປະຊາຊົນ.

ກອງປະຊຸມຄະນະປະຈໍາສະພາແຫ່ງຊາດ ພິຈາລະນານິຕິກໍາ ຕາມຂັ້ນຕອນ ດັ່ງນີ້:

1. ປະທານກໍາມາທິການສະພາແຫ່ງຊາດ ລາຍງານຜົນການຕິດຕາມກວດກາ;
2. ຜູ້ທີ່ອອກນິຕິກໍາ ຊີ້ແຈງ, ອະທິບາຍ;
3. ຄະນະປະຈໍາສະພາແຫ່ງຊາດ ຄົ້ນຄວ້າ, ມີຄໍາເຫັນ;
4. ຜູ້ທີ່ອອກນິຕິກໍາ ຊີ້ແຈງ, ອະທິບາຍເພີ່ມເຕີມ;
5. ຄະນະປະຈໍາສະພາແຫ່ງຊາດ ພິຈາລະນາ, ລົງມະຕິຮັບຮອງເອົາບົດລາຍງານຜົນການ ຕິດຕາມກວດກາ.

### ມາດຕາ 29 (ປັບປຸງ) ການຕິດຕາມກວດກາການເລືອກຕັ້ງສະມາຊິກສະພາແຫ່ງຊາດ

ຄະນະປະຈໍາສະພາແຫ່ງຊາດ ຕິດຕາມກວດກາການເຄື່ອນໄຫວວຽກງານຂອງ ຄະນະກໍາມະການເລືອກຕັ້ງລະດັບຊາດ ແລະ ຄະນະກໍາມະການເລືອກຕັ້ງຂັ້ນທ້ອງຖິ່ນ ເພື່ອເຮັດໃຫ້ການເລືອກຕັ້ງ ໄດ້ດໍາເນີນໄປຢ່າງມີ ປະຊາທິປະໄຕ, ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 30 (ປັບປຸງ) ການຕິດຕາມກວດກາການແກ້ໄຂຄໍາຮ້ອງທຸກ

ຄະນະປະຈໍາສະພາແຫ່ງຊາດ ຕິດຕາມກວດກາການແກ້ໄຂຄໍາຮ້ອງທຸກຂອງ ລັດຖະບານ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ສະພາປະຊາຊົນຂັ້ນແຂວງ ໃນການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການແກ້ໄຂຄໍາຮ້ອງທຸກ.

ໃນການຕິດຕາມກວດກາ ຖ້າເຫັນວ່າການຈັດຕັ້ງ ແລະ ບຸກຄະລາກອນ ຫາກມີການລະເມີດກົດໝາຍ, ຄະນະປະຈໍາສະພາແຫ່ງຊາດ ສະເໜີວິທີການ ແລະ ມາດຕະການໃຫ້ອົງການທີ່ກ່ຽວຂ້ອງ ແກ້ໄຂຜົນຂອງການຕິດຕາມກວດກາ ຕາມກົດໝາຍ ແລະ ລະບຽບການ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄໍາສະເໜີເປັນຕົ້ນໄປ ແລ້ວຕ້ອງລາຍງານໃຫ້ຄະນະປະຈໍາສະພາແຫ່ງຊາດ ໃນການແກ້ໄຂນັ້ນ.

### ມາດຕາ 31 (ປັບປຸງ) ການແຕ່ງຕັ້ງຄະນະສະເພາະກິດ

ຄະນະປະຈໍາສະພາແຫ່ງຊາດ ແຕ່ງຕັ້ງຄະນະສະເພາະກິດຂອງຕົນຂຶ້ນ ເພື່ອຕິດຕາມກວດກາລະອຽດບັນຫາໃດໜຶ່ງ ຕາມການສະເໜີຂອງກໍາມາທິການສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ, ສູນກາງແນວລາວສ້າງຊາດ ແລະ ການຈັດຕັ້ງມະຫາຊົນຂັ້ນສູນກາງ.

ມະຕິແຕ່ງຕັ້ງຄະນະສະເພາະກິດ ປະກອບດ້ວຍ:

1. ເນື້ອໃນຕິດຕາມກວດກາ;
2. ເປົ້າໝາຍຕິດຕາມກວດກາ;

3. ໂຄງປະກອບບຸກຄະລາກອນ ຂອງຄະນະສະເພາະກິດ ປະກອບດ້ວຍ ສະມາຊິກສະພາແຫ່ງຊາດ ແລະ ພະນັກງານ, ລັດຖະກອນທີ່ກ່ຽວຂ້ອງຈຳນວນໜຶ່ງ;

4. ສິດ ແລະ ໜ້າທີ່ ຂອງຄະນະສະເພາະກິດ ມີ ດັ່ງນີ້:

4.1. ສະເໜີໃຫ້ເປົ້າໝາຍທີ່ຖືກຕິດຕາມກວດກາ ລາຍງານເປັນລາຍລັກອັກສອນ, ສະໜອງຂໍ້ມູນ, ເອກະສານທີ່ກ່ຽວຂ້ອງກັບເນື້ອໃນການຕິດຕາມກວດກາ, ຊີ້ແຈງ, ອະທິບາຍບັນຫາທີ່ຄະນະສະເພາະກິດມີຄວາມສົນໃຈ;

4.2. ພິຈາລະນາ, ຕີລາຄາບົດລາຍງານ, ຂໍ້ມູນ, ເອກະສານຂອງເປົ້າໝາຍທີ່ຖືກຕິດຕາມກວດກາ;

4.3. ໃຫ້ຄຳແນະນຳແກ່ເປົ້າໝາຍທີ່ຖືກຕິດຕາມກວດກາ ກ່ຽວກັບການແກ້ໄຂ ເມື່ອເຫັນວ່າມີການລະເມີດກົດໝາຍ, ກໍ່ຄວາມເສຍຫາຍຕໍ່ ຜົນປະໂຫຍດຂອງຊາດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ;

4.4. ສະເໜີຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາຕົກລົງໃຫ້ເປົ້າໝາຍ ດັ່ງກ່າວຢຸດເຊົາການລະເມີດກົດໝາຍ ແລະ ຟື້ນຟູສິດ, ຜົນປະໂຫຍດຂອງຊາດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ. ມອບໃຫ້ການຈັດຕັ້ງທີ່ມີ ສິດ, ໜ້າທີ່ ທີ່ກ່ຽວຂ້ອງພິຈາລະນາການລົງວິໄນ ແລະ ນຳໃຊ້ມາດຕະການອື່ນຕໍ່ຜູ້ລະເມີດນັ້ນ ຕາມກົດໝາຍ;

4.5. ປະຕິບັດໃຫ້ຖືກຕ້ອງຕາມ ເນື້ອໃນ, ສິດ, ໜ້າທີ່ ທີ່ໄດ້ກຳນົດໄວ້ໃນມະຕິແຕ່ງຕັ້ງຄະນະສະເພາະກິດຢ່າງເຂັ້ມງວດ;

4.6. ສົ່ງບົດລາຍງານກ່ຽວກັບ ຜົນຂອງການຕິດຕາມກວດກາ ໃຫ້ຄະນະປະຈຳສະພາແຫ່ງຊາດ ພາຍໃນເວລາ ສິບວັນ ນັບແຕ່ວັນສິ້ນສຸດການຕິດຕາມກວດກາເປັນຕົ້ນໄປ.

ມະຕິດັ່ງກ່າວຕ້ອງສົ່ງໃຫ້ເປົ້າໝາຍ ທີ່ຖືກຕິດຕາມກວດກາ ແລະ ອົງການທີ່ກ່ຽວຂ້ອງ ເຈັດວັນ ກ່ອນຈະດຳເນີນການຕິດຕາມກວດກາ.

**ມາດຕາ 32 (ປັບປຸງ) ການພິຈາລະນາບົດລາຍງານຂອງຄະນະສະເພາະກິດ**

ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ພິຈາລະນາບົດລາຍງານຂອງຄະນະສະເພາະກິດ ຕາມຂັ້ນຕອນ ດັ່ງນີ້:

1. ຫົວໜ້າຄະນະສະເພາະກິດລາຍງານ;
2. ເປົ້າໝາຍທີ່ຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍ;
3. ຕົວແທນຂອງການຈັດຕັ້ງ ຫຼື ບຸກຄົນທີ່ຖືກເຊີນ ປະກອບຄຳເຫັນ;
4. ຄະນະປະຈຳສະພາແຫ່ງຊາດ ຄົ້ນຄ້ວາ, ມີຄຳເຫັນ;
5. ເປົ້າໝາຍທີ່ຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍເພີ່ມເຕີມ;
6. ຄະນະປະຈຳສະພາແຫ່ງຊາດ ພິຈາລະນາລົງມະຕິຮັບຮອງເອົາບົດລາຍງານຜົນການຕິດຕາມກວດກາ.

**ມາດຕາ 33 (ປັບປຸງ) ການພິຈາລະນາ ແລະ ແກ້ໄຂ ຜົນຂອງການຕິດຕາມກວດກາ**

ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ ແລະ ແກ້ໄຂຜົນຂອງການຕິດຕາມກວດກາ ດັ່ງນີ້:

1. ສະເໜີໃຫ້ການຈັດຕັ້ງ ຫຼື ບຸກຄົນ ທີ່ມີສິດ, ໜ້າທີ່ ທີ່ກ່ຽວຂ້ອງອອກຄຳສັ່ງໃຫ້ຜູ້ລະເມີດນັ້ນ ຢຸດເຊົາການລະເມີດໂດຍທັນທີ, ໃຫ້ຜູ້ລະເມີດຟື້ນຟູ, ຊົດເຊີຍຄ່າເສຍຫາຍຕໍ່ຜົນປະໂຫຍດຂອງຊາດ, ລວມໝູ່ ຫຼື ສິດ, ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ. ລົງວິໄນຕໍ່ຜູ້ລະເມີດ ຫຼື ນຳໃຊ້ມາດຕະການອື່ນຕາມກົດໝາຍ;

2. ໂຈະການປະຕິບັດນິຕິກຳຂອງອົງການລັດ ທີ່ຂັດກັບລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ ຫຼື ຂອງຄະນະປະຈຳສະພາແຫ່ງຊາດ ແລ້ວລາຍງານໃຫ້ກອງປະຊຸມສະພາແຫ່ງຊາດ ພິຈາລະນາ, ຕົກລົງກ່ຽວກັບການຍົກເລີກນິຕິກຳນັ້ນ.

## ໝວດທີ 3
## ການຕິດຕາມກວດກາ ຂອງກຳມາທິການສະພາແຫ່ງຊາດ

**ມາດຕາ 34 (ໃໝ່) ເປົ້າໝາຍ ທີ່ຖືກຕິດຕາມກວດກາ ຂອງກຳມາທິການສະພາແຫ່ງຊາດ**

ກຳມາທິການສະພາແຫ່ງຊາດ ຕິດຕາມກວດກາເປົ້າໝາຍ ຕາມມະຕິຂອງຄະນະປະຈຳສະພາແຫ່ງຊາດ ດັ່ງນີ້:

1. ກະຊວງ, ອົງການລັດທຽບເທົ່າກະຊວງ;

2. ອົງການໄອຍະການປະຊາຊົນພາກ, ອົງການໄອຍະການທະຫານຂັ້ນສູງ ແລະ ອົງການໄອຍະການທະຫານພາກ;

3. ສານປະຊາຊົນພາກ, ສານທະຫານຂັ້ນສູງ ແລະ ສານທະຫານພາກ;

4. ອົງການກວດສອບແຫ່ງລັດປະຈຳພາກ.

**ມາດຕາ 35 (ປັບປຸງ) ເນື້ອໃນການຕິດຕາມກວດກາ**

ການຕິດຕາມກວດກາ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ບົດລາຍງານ ການຈັດຕັ້ງ ແລະ ເຄື່ອນໄຫວຂອງ ບັນດາເປົ້າໝາຍທີ່ຖືກຕິດຕາມກວດກາ ທີ່ກຳມະການຕົນຮັບຜິດຊອບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງກົດໝາຍສະບັບນີ້;

2. ນິຕິກຳຂອງ ການຈັດຕັ້ງ ຫຼື ບຸກຄະລາກອນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງກົດໝາຍສະບັບນີ້ ຍົກເວັ້ນຄຳຕົກລົງ ກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;

3. ບົດລາຍງານຂອງໜ່ວຍງານສະເພາະກິດ;

4. ການໃຫ້ຄວາມກະຈ່າງແຈ້ງ ຂອງເປົ້າໝາຍທີ່ຖືກຕິດຕາມກວດກາ.

ມາດຕາ 36 ການສ້າງແຜນການຕິດຕາມກວດກາຂອງກຳມາທິການ ສະພາແຫ່ງຊາດ

ກຳມາທິການສະພາແຫ່ງຊາດ ສ້າງແຜນການຕິດຕາມກວດກາຂອງຕົນ ເປັນແຕ່ລະໄລຍະໂດຍອີງຕາມແຜນການຕິດຕາມກວດກາຂອງກອງປະຊຸມສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ແລະ ຄຳສະເໜີຂອງກຳມະການສັງກັດກຳມາທິການ. ຫຼັງຈາກແຜນການໄດ້ຖືກຮັບຮອງເອົາແລ້ວ ກຳມາທິການສະພາແຫ່ງຊາດ ຕ້ອງແບ່ງຄວາມຮັບຜິດຊອບໃຫ້ກຳມະການສັງກັດກຳມາທິການຂອງຕົນ ເພື່ອຈັດຕັ້ງປະຕິບັດ.

ມາດຕາ 37 (ປັບປຸງ) ການຕິດຕາມກວດກາບົດລາຍງານ

ກຳມາທິການ ສະພາແຫ່ງຊາດ ຕິດຕາມກວດກາບົດລາຍງານ ຂອງເປົ້າໝາຍທີ່ຖືກຕິດຕາມກວດກາ ຖ້າເຫັນວ່າມີຄວາມຈຳເປັນກໍເຊີນ ການຈັດຕັ້ງ ແລະ ບຸກຄະລາກອນດັ່ງກ່າວມາ ໃຫ້ຄວາມກະຈ່າງແຈ້ງ ຕາມຂັ້ນຕອນ ດັ່ງນີ້:

1. ການຈັດຕັ້ງ ຫຼື ບຸກຄະລາກອນ ທີ່ກ່ຽວຂ້ອງລາຍງານ;
2. ປະທານກຳມາທິການມີຄຳເຫັນ;
3. ກຳມາທິການ ຄົ້ນຄວ້າ, ປະກອບຄຳເຫັນ;
4. ຜູ້ລາຍງານຊີ້ແຈງ, ອະທິບາຍ;
5. ລົງມະຕິຮັບຮອງເອົາບົດລາຍງານ.

ໃນກໍລະນີ ຫາກເຫັນວ່າບົດລາຍງານດັ່ງກ່າວ ມີການລະເມີດກົດໝາຍ ແລະ ລະບຽບການ, ກຳມາທິການສະພາແຫ່ງຊາດ ມີສິດສະເໜີໃຫ້ອົງການດັ່ງກ່າວແກ້ໄຂ ແລະ ແຈ້ງໃຫ້ກຳມາທິການສະພາແຫ່ງຊາດ ພາຍໃນເວລາ ສາມສິບວັນ ນັບແຕ່ວັນ ໄດ້ຮັບຄຳສະເໜີເປັນຕົ້ນໄປ. ຖ້າຫາກບໍ່ມີການແກ້ໄຂ ຫຼື ແກ້ໄຂບໍ່ເໝາະສົມ ກໍໃຫ້ລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາແກ້ໄຂ.

ມາດຕາ 38 (ປັບປຸງ) ການຕິດຕາມກວດການິຕິກຳ

ກຳມາທິການສະພາແຫ່ງຊາດ ຕິດຕາມກວດການິຕິກຳ ຕາມຂັ້ນຕອນ ດັ່ງນີ້:

1. ຜູ້ອອກນິຕິກຳ ຊີ້ແຈງ, ອະທິບາຍ;
2. ປະທານກຳມາທິການ ມີຄຳເຫັນ;
3. ຜູ້ເຂົ້າຮ່ວມກອງປະຊຸມ ຄົ້ນຄວ້າ, ປະກອບຄຳເຫັນ;
4. ຜູ້ອອກນິຕິກຳ ຊີ້ແຈງ, ອະທິບາຍ ເພີ່ມເຕີມ;
5. ລົງມະຕິຮັບຮອງເອົາຜົນການຕິດຕາມກວດກາ.

ໃນກໍລະນີ ເຫັນວ່າ ນິຕິກຳດັ່ງກ່າວ ຂັດກັບກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ, ກຳມາທິການສະພາແຫ່ງຊາດ ມີສິດສະເໜີໃຫ້ອົງການດັ່ງກ່າວແກ້ໄຂ ແລະ ແຈ້ງໃຫ້ກຳມາທິການສະພາແຫ່ງຊາດ ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳເໜີເປັນຕົ້ນໄປ. ຖ້າຫາກບໍ່ມີການແກ້ໄຂ ຫຼື ແກ້ໄຂບໍ່ເໝາະສົມ ກໍໃຫ້ລາຍງານ ຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາແກ້ໄຂ.

ມາດຕາ 39 (ປັບປຸງ) ການແຕ່ງຕັ້ງໜ່ວຍງານສະເພາະກິດ

ເມື່ອມີຄວາມຈຳເປັນ ຫຼື ຕາມການມອບໝາຍຂອງຄະນະປະຈຳສະພາແຫ່ງຊາດ, ກຳມາທິການສະພາແຫ່ງຊາດ ອອກຂໍ້ຕົກລົງແຕ່ງຕັ້ງໜ່ວຍງານສະເພາະກິດຂຶ້ນ ເພື່ອຕິດຕາມກວດກາລະອຽດກ່ຽວກັບບັນຫາໃດໜຶ່ງ. ສຳລັບໂຄງປະກອບຂອງຂໍ້ຕົກລົງ ໃຫ້ປະຕິບັດຄືກັນກັບໂຄງປະກອບຂອງມະຕິແຕ່ງຕັ້ງຄະນະສະເພາະກິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 31 ຂອງກົດໝາຍສະບັບນີ້.

ມາດຕາ 40 (ໃໝ່) ການພິຈາລະນາບົດລາຍງານຂອງໜ່ວຍງານສະເພາະກິດ

ກຳມາທິການສະພາແຫ່ງຊາດ ເປີດກອງປະຊຸມຂອງຕົນຂຶ້ນ ເພື່ອຄົ້ນຄວ້າພິຈາລະນາບົດລາຍງານຂອງໜ່ວຍງານສະເພາະກິດ ຕາມຂັ້ນຕອນ ດັ່ງນີ້:

1. ຫົວໜ້າໜ່ວຍງານ ລາຍງານ;
2. ເປົ້າໝາຍທີ່ຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍ;
3. ກອງປະຊຸມ ຄົ້ນຄວ້າ, ປະກອບຄຳເຫັນ;
4. ເປົ້າໝາຍທີ່ຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍ ເພີ່ມເຕີມ;
5. ປະທານກອງປະຊຸມສະຫຼຸບ, ຫຼັງຈາກນັ້ນ ກຳມະການສັງກັດກຳມາທິການ ທີ່ເຂົ້າຮ່ວມກອງປະຊຸມ ລົງມະຕິຮັບຮອງເອົາບົດລາຍງານ;
6. ລາຍງານຜົນຂອງກອງປະຊຸມ ໃຫ້ຄະນະປະຈຳສະພາແຫ່ງຊາດ ພ້ອມທັງແຈ້ງໃຫ້ການຈັດຕັ້ງ ແລະ ບຸກຄົນ ທີ່ກ່ຽວຂ້ອງ ຮັບຊາບ.

ມາດຕາ 41 ການພິຈາລະນາ ແລະ ແກ້ໄຂຜົນຂອງການຕິດຕາມກວດກາຂອງໜ່ວຍງານສະເພາະກິດ

ກຳມາທິການສະພາແຫ່ງຊາດ ພິຈາລະນາ ແລະ ແກ້ໄຂ ຜົນຂອງການຕິດຕາມກວດກາຂອງໜ່ວຍງານສະເພາະກິດ ດ້ວຍການສະເໜີໃຫ້ການຈັດຕັ້ງ ຫຼື ບຸກຄົນ ທີ່ມີ ສິດ, ໜ້າທີ່ ທີ່ກ່ຽວຂ້ອງອອກຄຳສັ່ງໂຈະການຈັດຕັ້ງປະຕິບັດ ນິຕິກຳທີ່ບໍ່ຖືກຕ້ອງ ແລະ ຢຸດເຊົາການກະທຳທີ່ເປັນການລະເມີດກົດໝາຍ, ລະບຽບການ ແລະ ລາຍງານໃຫ້ຄະນະປະຈຳສະພາແຫ່ງຊາດ ເພື່ອມີມາດຕະການ ແລະ ວິທີການແກ້ໄຂ.

# ໝວດທີ 4
## ການຕິດຕາມກວດກາຂອງກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ

**ມາດຕາ 42 (ໃໝ່) ການຕິດຕາມກວດກາຂອງຄະນະສະມາຊິກສະພາແຫ່ງຊາດເພດຍິງ**

ຄະນະສະມາຊິກສະພາແຫ່ງຊາດເພດຍິງ ມີ ສິດ ແລະ ໜ້າທີ່ ໃນການຈັດຕັ້ງປະຕິບັດຕາມແຜນການຕິດຕາມກວດກາຂອງ ສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ຊຶ່ງມີເນື້ອໃນຕິດຕາມກວດກາ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ ລວມທັງນິຕິກຳລຸ່ມກົດໝາຍ ໃນຂົງເຂດຄວາມຮັບຜິດຊອບຂອງຕົນ;

2. ການຈັດຕັ້ງປະຕິບັດຄວາມສະເໝີພາບຍິງ-ຊາຍ, ການພັດທະນາ, ການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ຍິງ ແລະ ເດັກ, ການຕ້ານ, ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ;

3. ຜົນການແກ້ໄຂຄຳຮ້ອງທຸກ ທີ່ພົວພັນກັບວຽກງານແມ່ຍິງ ແລະ ເດັກ ພ້ອມທັງຜ່ານສາຍດ່ວນຂອງກອງປະຊຸມສະພາແຫ່ງຊາດທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

4. ປາກົດການຫຍໍ້ທໍ້ທີ່ມີຜົນກະທົບຕໍ່ແມ່ຍິງ ແລະ ການຈັດຕັ້ງປະຕິບັດມະຕິຂອງກອງປະຊຸມຄົບຄະນະສະມາຊິກສະພາແຫ່ງຊາດເພດຍິງ;

5. ເນື້ອໃນອື່ນ ຕາມການມອບໝາຍຂອງຄະນະປະຈຳສະພາແຫ່ງຊາດ;

6. ເຊີນພາກສ່ວນທີ່ກ່ຽວຂ້ອງມາລາຍງານ ການເຄື່ອນໄຫວວຽກງານຕໍ່ກອງປະຊຸມຄົບຄະນະສະມາຊິກສະພາແຫ່ງຊາດເພດຍິງ ລວມທັງການຊັກຖາມຕໍ່ບາງບັນຫາໃນຂອບເຂດວຽກງານຂອງຕົນ ທີ່ປະຊາຊົນ ແລະ ແມ່ຍິງບັນດາເຜົ່າມີຄວາມສົນໃຈ.

ລາຍງານຜົນຂອງການຕິດຕາມກວດກາຕໍ່ຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 43 (ໃໝ່) ການຕິດຕາມກວດກາຂອງຄະນະຮັບຜິດຊອບວຽກງານເຂດເລືອກຕັ້ງ**

ຄະນະຮັບຜິດຊອບວຽກງານເຂດເລືອກຕັ້ງ ມີ ສິດ ແລະ ໜ້າທີ່ ຕິດຕາມກວດກາການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະມາຊິກສະພາແຫ່ງຊາດ ແລະ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລ້ວລາຍງານຜົນຂອງການຕິດຕາມກວດກາຕໍ່ຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 44 (ໃໝ່) ການຕິດຕາມກວດກາຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ**

ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ມີ ສິດ ແລະ ໜ້າທີ່ ນຳເອົາແຜນການຕິດຕາມກວດກາຂອງສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ກຳມາທິການສະພາແຫ່ງຊາດ

ໄປປະສານສົມທົບກັບຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເພື່ອຄວາມເປັນເອກະພາບ ແລະ ຈັດຕັ້ງປະຕິບັດ ໃຫ້ປາກົດເປັນຈິງ ແລະ ມີປະສິດທິຜົນ.

ລາຍງານຜົນຂອງການຕິດຕາມກວດກາຕໍ່ຄະນະປະຈຳສະພາແຫ່ງຊາດ.

## ໝວດທີ 5
## ການຕິດຕາມກວດກາຂອງສະມາຊິກສະພາແຫ່ງຊາດ

**ມາດຕາ 45 (ປັບປຸງ) ການຕິດຕາມກວດກາ ຂອງສະມາຊິກສະພາແຫ່ງຊາດ**

ສະມາຊິກສະພາແຫ່ງຊາດ ຕິດຕາມກວດກາຕາມເນື້ອໃນ ດັ່ງນີ້:

1. ບົດລາຍງານຂອງພາກສ່ວນຕ່າງໆ ໃນກອງປະຊຸມສະພາແຫ່ງຊາດ;
2. ຕັ້ງຄຳຊັກຖາມຕໍ່ເປົ້າໝາຍທີ່ຖືກຕິດຕາມກວດກາ;
3. ນິຕິກຳຂອງອົງການລັດ ຍົກເວັ້ນຄຳຕັດສິນ ກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;
4. ການແກ້ໄຂຄຳຮ້ອງທຸກ;
5. ຕິດຕາມກວດກາຕາມການມອບໝາຍຂອງ ຄະນະປະຈຳສະພາແຫ່ງຊາດ.

ລາຍງານຜົນຂອງການຕິດຕາມກວດກາຕໍ່ຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 46 (ປັບປຸງ) ການສ້າງ ແລະ ປະຕິບັດແຜນການຕິດຕາມກວດກາ**

ສະມາຊິກສະພາແຫ່ງຊາດ ສ້າງແຜນການ, ຕາຕະລາງ ການເຄື່ອນໄຫວວຽກງານຕິດຕາມກວດກາຂອງຕົນ ໂດຍອີງຕາມແຜນການຂອງ ກອງປະຊຸມສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ແລະ ກຳມາທິການສະພາແຫ່ງຊາດ.

ນອກຈາກດຳເນີນການຕິດຕາມກວດກາດ້ວຍຕົນເອງແລ້ວ ສະມາຊິກສະພາແຫ່ງຊາດ ກໍມີສິດ, ໜ້າທີ່ ເຂົ້າຮ່ວມການເຄື່ອນໄຫວຕິດຕາມກວດກາຂອງ ກຳມາທິການສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມສະພາແຫ່ງຊາດ.

ສຳລັບສະມາຊິກສະພາແຫ່ງຊາດ ຜູ້ທີ່ຄວບຕຳແໜ່ງ ໃຫ້ແບ່ງເວລາເຄື່ອນໄຫວວຽກງານຕິດຕາມກວດກາຢ່າງໜ້ອຍ ໜຶ່ງສ່ວນສາມ ຂອງເວລາເຮັດວຽກທັງໝົດ.

**ມາດຕາ 47 (ປັບປຸງ) ການເຄື່ອນໄຫວຕິດຕາມກວດກາ**

ສະມາຊິກສະພາແຫ່ງຊາດ ເຄື່ອນໄຫວຕິດຕາມກວດກາ ດັ່ງນີ້:

1. ເຂົ້າຮ່ວມການຄົ້ນຄວ້າ, ປະກອບຄຳເຫັນ, ພິຈາລະນາບົດລາຍງານ, ນິຕິກຳຂອງອົງການລັດ ໃນກອງປະຊຸມສະພາແຫ່ງຊາດ, ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ, ໃນກອງປະຊຸມຄົບຄະນະຂອງກຳມາທິການ;

2. ເຂົ້າຮ່ວມໃນຄະນະສະເພາະກິດ ຫຼື ໜ່ວຍງານສະເພາະກິດ ຕາມການແຕ່ງຕັ້ງ;

3. ຕິດຕາມກວດກາຕາມແຜນການຂອງຕົນ.

**ມາດຕາ 48 (ປັບປຸງ) ການຊັກຖາມຢູ່ໃນກອງປະຊຸມສະພາແຫ່ງຊາດ**

ສະມາຊິກສະພາແຫ່ງຊາດ ຊັກຖາມ ຄະນະປະຈຳ, ປະທານ, ຮອງປະທານກຳມາທິການ ແລະ ເລຂາທິການ ສະພາແຫ່ງຊາດ, ນາຍົກລັດຖະມົນຕີ, ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ.

ຄຳຊັກຖາມ ຕ້ອງກະທັດຮັດ, ຈະແຈ້ງ, ມີບ່ອນອີງ ແລະ ຕ້ອງຕິດພັນກັບ ສິດ, ໜ້າທີ່, ຄວາມຮັບຜິດຊອບຂອງຜູ້ທີ່ຖືກຊັກຖາມ, ອາດຊັກຖາມດ້ວຍປາກເປົ່າ ຫຼື ລາຍລັກອັກສອນ.

**ມາດຕາ 49 ການຕິດຕາມກວດການິຕິກຳ**

ສະມາຊິກສະພາແຫ່ງຊາດ ເຂົ້າຮ່ວມຄົ້ນຄວ້າ, ປະກອບຄຳເຫັນ ແລະ ພິຈາລະນານິຕິກຳໃນກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄົບຄະນະຂອງກຳມາທິການສະພາແຫ່ງຊາດ.

**ມາດຕາ 50 ການຕິດຕາມກວດກາ ການແກ້ໄຂຄຳຮ້ອງທຸກ**

ສະມາຊິກສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ຮັບຕ້ອນ ແລະ ໃຫ້ຄຳປຶກສາແກ່ປະຊາຊົນ, ຮັບຄຳຮ້ອງທຸກຂອງພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເພື່ອສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ພິຈາລະນາ, ແກ້ໄຂ ແລະ ຕິດຕາມກວດກາຜົນການແກ້ໄຂຄຳຮ້ອງທຸກດັ່ງກ່າວ.

**ມາດຕາ 51 ການລາຍງານຜົນຂອງການຕິດຕາມກວດກາ**

ພາຍຫຼັງທີ່ໄດ້ເຄື່ອນໄຫວຕິດຕາມກວດກາແລ້ວ ສະມາຊິກສະພາແຫ່ງຊາດ, ຕ້ອງລາຍງານຜົນຂອງການຕິດຕາມກວດການັ້ນ ໃຫ້ຄະນະປະຈຳສະພາແຫ່ງຊາດ, ກຳມາທິການສະພາແຫ່ງຊາດ ທີ່ຕົນສັງກັດເປັນລາຍລັກອັກສອນ.

ມາດຕາ 52 (ປັບປຸງ) ການກວດກາຂອງປະຊາຊົນ

ແນວລາວສ້າງຊາດ, ການຈັດຕັ້ງມະຫາຊົນ, ການຈັດຕັ້ງສັງຄົມ ທຸກຂັ້ນ ແລະ ປະຊາຊົນລາວບັນດາເຜົ່າ ຕິດຕາມກວດກາສະມາຊິກສະພາແຫ່ງຊາດ ໂດຍຮັບຟັງການລາຍງານການເຄື່ອນໄຫວວຽກງານຂອງສະມາຊິກສະພາແຫ່ງຊາດ ໃນເຂດເລືອກຕັ້ງຂອງຕົນ ຢ່າງໜ້ອຍ ປີລະ ສອງ ເທື່ອ.

ການກວດກາຂອງປະຊາຊົນ ດຳເນີນດ້ວຍການຮັບຟັງຈາກ ການປະກອບຄຳເຫັນ ຂອງສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງຂອງຕົນ ໃນກອງປະຊຸມສະພາແຫ່ງຊາດ.

## ພາກທີ III
## ການຕິດຕາມກວດກາຂອງສະພາປະຊາຊົນຂັ້ນແຂວງ

**ມາດຕາ 53 (ໃໝ່) ການຕິດຕາມກວດກາ ຂອງສະພາປະຊາຊົນຂັ້ນແຂວງ**

ສະພາປະຊາຊົນຂັ້ນແຂວງ ດຳເນີນການຕິດຕາມກວດກາ ໂດຍ:

1. ກອງປະຊຸມສະພາປະຊາຊົນຂັ້ນແຂວງ;
2. ຄະນະປະຈຳສະພາປະຊາຊົນຂັ້ນແຂວງ;
3. ຄະນະກຳມະການສະພາປະຊາຊົນຂັ້ນແຂວງ;
4. ກົງຈັກທີ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງສ້າງຕັ້ງ;
5. ສະມາຊິກສະພາປະຊາຊົນຂັ້ນແຂວງ.

## ໝວດທີ 1
## ການຕິດຕາມກວດກາຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ

**ມາດຕາ 54 (ໃໝ່) ການຕິດຕາມກວດກາຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ**

ສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາ ໂດຍຜ່ານກອງປະຊຸມຂອງຕົນ ບົນພື້ນຖານການເຄື່ອນໄຫວຕິດຕາມກວດກາຂອງ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ຄະນະກຳມະການສະພາປະຊາຊົນຂັ້ນແຂວງ, ໜ່ວຍສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງ ເມືອງ, ເທດສະບານ, ນະຄອນ, ໜ່ວຍສະມາຊິກສະພາປະຊາຊົນເພດຍິງຂັ້ນແຂວງ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ.

**ມາດຕາ 55 (ໃໝ່) ເປົ້າໝາຍທີ່ຖືກຕິດຕາມກວດກາ ຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາເປົ້າໝາຍດັ່ງນີ້:

1. ປະທານສະພາປະຊາຊົນຂັ້ນແຂວງ;

2. ຮອງປະທານ ແລະ ກຳມະການຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

3. ປະທານ, ຮອງປະທານຄະນະກຳມະການ ແລະ ເລຂາທິການ ສະພາປະຊາຊົນຂັ້ນແຂວງ;

4. ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;

5. ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ;

6. ຫົວໜ້າອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ, ເຂດ ຫຼື ເມືອງ, ເທດສະບານ, ນະຄອນ;

7. ປະທານສານປະຊາຊົນ ແຂວງ, ນະຄອນຫຼວງ, ເຂດ ຫຼື ເມືອງ, ເທດສະບານ, ນະຄອນ.

**ມາດຕາ 56 (ໃໝ່) ແຜນການຕິດຕາມກວດກາຂອງສະພາປະຊາຊົນຂັ້ນແຂວງ**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນຜູ້ສ້າງແຜນການຕິດຕາມກວດກາຂອງສະພາປະຊາຊົນຂັ້ນແຂວງ ແລ້ວສະເໜີຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ເພື່ອພິຈາລະນາຮັບຮອງເອົາ. ໃນກໍລະນີຈຳເປັນ ຈະດຳເນີນການຕິດຕາມກວດການອກແຜນການກໍໄດ້ ຕາມການຕົກລົງຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລ້ວລາຍງານຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ເທື່ອຖັດໄປ.

**ມາດຕາ 57 (ໃໝ່) ເນື້ອໃນການຕິດຕາມກວດກາ ຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ເຄື່ອນໄຫວຕິດຕາມກວດກາ ຕາມເນື້ອໃນຕົ້ນຕໍ ດັ່ງນີ້:

1. ບົດລາຍງານຂອງ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ;

2. ນິຕິກຳຂອງ ການຈັດຕັ້ງ ຫຼື ບຸກຄະລາກອນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 55 ຂອງກົດໝາຍສະບັບນີ້ ທີ່ເຫັນວ່າຂັດກັບກົດໝາຍ ຫຼື ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງສະພາປະຊາຊົນຂັ້ນແຂວງ ຍົກເວັ້ນຄຳຕົກລົງ ກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;

3. ການຕອບຄຳຊັກຖາມຂອງບັນດາເປົ້າໝາຍທີ່ຖືກຕິດຕາມກວດກາ;

4. ການແກ້ໄຂຄຳຮ້ອງຂໍຄວາມເປັນທຳ;

5. ບົດລາຍງານຂອງຄະນະກຳມະການກວດກາຊົ່ວຄາວ.

**ມາດຕາ 58 (ໃໝ່) ການຕິດຕາມກວດກາບົດລາຍງານ ຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ**

ໃນກອງປະຊຸມສະໄໝສາມັນ ເທື່ອທີໜຶ່ງ ສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາບົດລາຍງານຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດ

ຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂັ້ນແຂວງປະຈຳປີ ແລະ ທິດທາງແຜນການພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂັ້ນແຂວງໃນປີຕໍ່ໄປ; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີຜ່ານມາ ແລະ ທິດທາງວຽກງານປະຈຳປີຕໍ່ໜ້າຂອງປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ.

ໃນກອງປະຊຸມສະໄໝສາມັນ ເທື່ອທີສອງ ສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາບົດລາຍງານຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂັ້ນແຂວງ ທົກເດືອນຕົ້ນປີ ແລະ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຂັ້ນແຂວງ ຫົກເດືອນ ທ້າຍປີ ແລະ/ຫຼື ການດັດແກ້ແຜນງົບປະມານແຫ່ງລັດດັ່ງກ່າວ; ບົດລາຍງານການຈັດຕັ້ງປະຕິບັດວຽກງານໃດໜຶ່ງຂອງ ຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ.

ບົດລາຍງານການປະຕິບັດວຽກງານ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໃນລະຫວ່າງສອງ ກອງປະຊຸມສະພາປະຊາຊົນຂັ້ນແຂວງ.

ໃນກອງປະຊຸມສະໄໝສາມັນທ້າຍອາຍຸການຂອງສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາບົດລາຍງານການເຄື່ອນໄຫວວຽກງານຕະຫຼອດອາຍຸການຂອງ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ.

ບົດລາຍງານທີ່ໄດ້ກຳນົດໄວ້ໃນມາດຕານີ້ ຕ້ອງໄດ້ຜ່ານການຄົ້ນຄວ້າ, ພິຈາລະນາຂອງຄະນະກຳມະການທີ່ກ່ຽວຂ້ອງ ຕາມການມອບໝາຍຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາ ບົດລາຍງານຕາມຂັ້ນຕອນ ດັ່ງນີ້:

1. ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ລາຍງານ;

2. ປະທານຄະນະກຳມະການສະພາປະຊາຊົນຂັ້ນແຂວງ ທີ່ຖືກມອບໝາຍ ປະກອບຄຳເຫັນຕໍ່ບົດລາຍງານດັ່ງກ່າວ;

3. ສະມາຊິກສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າ, ປະກອບຄຳເຫັນ, ອາດຊັກຖາມຕໍ່ການລາຍງານ; ຜູ້ລາຍງານໃຫ້ຄຳຊີ້ແຈງ, ຕອບຄຳຊັກຖາມ;

4. ກອງປະຊຸມສະພາປະຊາຊົນຂັ້ນແຂວງ ອາດສະເໜີໃຫ້ບຸກຄະລາກອນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 55 ຂອງກົດໝາຍສະບັບນີ້ ມາໃຫ້ຄວາມກະຈ່າງແຈ້ງກ່ຽວກັບບັນຫາໃດໜຶ່ງສະເພາະ ເມື່ອເຫັນວ່າມີຄວາມຈຳເປັນ;

5. ກອງປະຊຸມສະພາປະຊາຊົນຂັ້ນແຂວງ ໃຫ້ຄະແນນຕໍ່ ບົດລາຍງານ, ການໃຫ້ຄວາມກະຈ່າງແຈ້ງ, ການຕອບຄຳຊັກຖາມນັ້ນ ຖ້າເຫັນວ່າມີຄວາມຈຳເປັນ.

**ມາດຕາ 59 (ໃໝ່) ການຕິດຕາມກວດການິຕິກຳ ຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ຕິດຕາມກວດການິຕິກຳຂອງ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ອົງການປົກຄອງ ແຂວງ, ນະຄອນຫຼວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ ທີ່ຂັດກັບລັດຖະທຳມະນູນ, ກົດໝາຍ ຫຼື ມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ ຕາມການສະເໜີຂອງ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຫຼື ມີການສະເໜີ ຢ່າງໜ້ອຍ ໜຶ່ງສ່ວນສີ່ ຂອງຈຳນວນສະມາຊິກສະພາປະຊາຊົນຂັ້ນແຂວງ ທັງໝົດ.

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ຕິດຕາມກວດການິຕິກຳລຸ່ມກົດໝາຍ ຕາມຂັ້ນຕອນດັ່ງນີ້:

1. ປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ ລາຍງານ;
2. ສະມາຊິກສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າ, ປະກອບຄຳເຫັນ;
3. ຜູ້ອອກນິຕິກຳ ຊີ້ແຈງອະທິບາຍ;
4. ລົງມະຕິຮັບຮອງເອົາການຍົກເລີກບາງສ່ວນ ຫຼື ທັງໝົດນິຕິກຳນັ້ນ.

**ມາດຕາ 60 (ໃໝ່) ການຊັກຖາມ ແລະ ການຕອບຄຳຊັກຖາມໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ**

ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ ການຊັກຖາມ ແລະ ການຕອບຄຳຊັກຖາມ ໃຫ້ປະຕິບັດ ດັ່ງນີ້:

ກ. ການຊັກຖາມ:

1. ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ສົ່ງຄຳຊັກຖາມ ໃຫ້ເປົ້າໝາຍທີ່ຖືກຊັກຖາມກ່ອນການດຳເນີນກອງປະຊຸມ;

2. ສະມາຊິກສະພາປະຊາຊົນຂັ້ນແຂວງ ຊັກຖາມຢູ່ກອງປະຊຸມ.

ຂ. ການຕອບຄຳຊັກຖາມ:

1. ຜູ້ຖືກຊັກຖາມ ຕອບຄຳຊັກຖາມ ຕາມຄຳຊັກຖາມ ທີ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ສົ່ງໃຫ້;

2. ຕອບຄຳຊັກຖາມ ທີ່ສະມາຊິກສະພາປະຊາຊົນຂັ້ນແຂວງ ຊັກຖາມຕື່ມ;

3. ການຕອບຄຳຊັກຖາມ ຕ້ອງຕອບໃຫ້ຖືກຕ້ອງ, ຊັດເຈນ ຕາມຄຳຊັກຖາມ.

ຫຼັງຈາກຟັງການຕອບຄຳຊັກຖາມແລ້ວ ຖ້າສະມາຊິກສະພາປະຊາຊົນຂັ້ນແຂວງ ຫາກບໍ່ເຫັນດີນຳຄຳຕອບນັ້ນ ກໍສະເໜີໃຫ້ຜູ້ຖືກຊັກຖາມ ຊີ້ແຈງຕໍ່ກອງປະຊຸມຕື່ມ ຖ້າເຫັນວ່າຈຳເປັນກໍສະເໜີໃຫ້ກອງປະຊຸມລົງມະຕິຕໍ່ການຕອບຄຳຊັກຖາມດັ່ງກ່າວ.

**ມາດຕາ 61 (ໃໝ່) ການຕິດຕາມກວດກາ ກ່ຽວກັບການແກ້ໄຂຄຳຮ້ອງທຸກ**

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບການແກ້ໄຂຄຳຮ້ອງທຸກຂອງ ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໂດຍຄະນະປະຈຳສະພາປະຊາຊົນ, ອົງການປົກຄອງ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນຂັ້ນແຂວງ.

**ມາດຕາ 62 (ໃໝ່) ການແຕ່ງຕັ້ງຄະນະກຳມະການຊົ່ວຄາວ**

ປະທານສະພາປະຊາຊົນຂັ້ນແຂວງ ແຕ່ງຕັ້ງຄະນະກຳມະການຊົ່ວຄາວຂອງສະພາປະຊາຊົນຂັ້ນແຂວງ ຕາມການຕົກລົງຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ ເພື່ອຕິດຕາມກວດກາລະອຽດ ກ່ຽວກັບບັນຫາໃດໜຶ່ງ ທີ່ເຫັນວ່າມີຄວາມຈຳເປັນ ຕາມການສະເໜີ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ຄະນະກຳມະການສະພາປະຊາຊົນຂັ້ນແຂວງ, ສະມາຊິກສະພາປະຊາຊົນຂັ້ນແຂວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ຂັ້ນແຂວງ.

ຄະນະກຳມະການຊົ່ວຄາວ ປະກອບດ້ວຍ ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານ, ລັດຖະກອນ ທີ່ກ່ຽວຂ້ອງຈຳນວນໜຶ່ງ ຊຶ່ງມີ ສິດ ແລະ ໜ້າທີ່ດັ່ງດຽວກັນກັບຄະນະສະເພາະກິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 72 ຂອງກົດໝາຍສະບັບນີ້. ຄະນະດັ່ງກ່າວຈະຖືກຍຸບເລີກໄປໃນຕົວພາຍຫຼັງທີ່ໄດ້ສຳເລັດການປະຕິບັດໜ້າທີ່.

ມະຕິແຕ່ງຕັ້ງຄະນະກຳມະການຊົ່ວຄາວ ຕ້ອງສົ່ງໃຫ້ການຈັດຕັ້ງ ຫຼື ບຸກຄະລາກອນ ທີ່ຖືກຕິດຕາມກວດກາ ແລະ ອົງການທີ່ກ່ຽວຂ້ອງ ເຈັດວັນ ກ່ອນຈະດຳເນີນການຕິດຕາມກວດກາ.

**ມາດຕາ 63 (ໃໝ່) ການພິຈາລະນາບົດລາຍງານ ຜົນການຕິດຕາມກວດກາຂອງຄະນະກຳມະການຊົ່ວຄາວ**

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ພິຈາລະນາບົດລາຍງານຜົນການຕິດຕາມກວດກາຂອງຄະນະກຳມະການຊົ່ວຄາວ ຕາມຂັ້ນຕອນ ດັ່ງນີ້:

1. ຫົວໜ້າຄະນະກຳມະການຊົ່ວຄາວ ລາຍງານຜົນຂອງການຕິດຕາມກວດກາ;
2. ການຈັດຕັ້ງ ຫຼື ບຸກຄະລາກອນ ທີ່ຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍ;
3. ສະມາຊິກສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າ, ປະກອບຄຳເຫັນ;
4. ການຈັດຕັ້ງ ຫຼື ບຸກຄະລາກອນ ທີ່ຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍ ເພີ່ມເຕີມ;
5. ລົງມະຕິກ່ຽວກັບຜົນຂອງການຕິດຕາມກວດການັ້ນ.

**ມາດຕາ 64 (ໃໝ່) ການໃຫ້ຄະແນນ, ການລົງມະຕິບໍ່ໄວ້ວາງໃຈ, ການປົດຕຳແໜ່ງ**

ການໃຫ້ຄະແນນ, ການລົງມະຕິບໍ່ໄວ້ວາງໃຈ, ການປົດຕຳແໜ່ງ ມີ ດັ່ງນີ້:

ກ. ການໃຫ້ຄະແນນ

ການໃຫ້ຄະແນນ ແມ່ນ ການປະເມີນຜົນໃນການປະຕິບັດໜ້າທີ່ວຽກງານ ເປັນແຕ່ລະປີ ຕໍ່ບຸກຄະລາກອນ ທີ່ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ຫຼື ຮັບຮອງເອົາການສະເໜີແຕ່ງຕັ້ງ ໂດຍສະມາຊິກສະພາປະຊາຊົນຂັ້ນແຂວງ.

ການໃຫ້ຄະແນນ ໃຫ້ປະຕິບັດ ດັ່ງນີ້:

1. ປິດລັບ, ໂດຍກົງ;

2. ພາວະວິໄສ, ຍຸຕິທຳ, ບໍ່ອະຄະຕິ;

3. ເປັນ ຫ້າ ລະດັບ ຄື ດີຫຼາຍ, ດີ, ກາງ, ອ່ອນ, ອ່ອນຫຼາຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

4. ສະຫຼຸບ ສັງລວມຄະແນນ, ສົ່ງໃຫ້ບຸກຄະລາກອນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງ.

ຂ. ການລົງມະຕິບໍ່ໄວ້ວາງໃຈ

ການລົງມະຕິບໍ່ໄວ້ວາງໃຈ ແມ່ນ ການລົງຄະແນນສຽງ ຂອງສະມາຊິກສະພາປະຊາຊົນຂັ້ນແຂວງ ຕໍ່ບຸກຄະລາກອນ ທີ່ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ຫຼື ຮັບຮອງເອົາການສະເໜີແຕ່ງຕັ້ງ ທີ່ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຕໍ່ຜົນປະໂຫຍດຂອງປະເທດຊາດ ແລະ ປະຊາຊົນ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຫຼື ຢ່າງໜ້ອຍ ໜຶ່ງສ່ວນສີ່ ຂອງຈຳນວນສະມາຊິກສະພາປະຊາຊົນຂັ້ນແຂວງ ທັງໝົດເປັນຜູ້ສະເໜີ.

ການລົງມະຕິບໍ່ໄວ້ວາງໃຈ ໃຫ້ປະຕິບັດ ດັ່ງນີ້:

1. ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ສະເໜີເຫດຜົນ;

2. ສະມາຊິກສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າ, ປະກອບຄຳເຫັນ;

3. ເປົ້າໝາຍທີ່ຖືກສະເໜີ ຊີ້ແຈງ, ອະທິບາຍ;

4. ສະມາຊິກສະພາປະຊາຊົນຂັ້ນແຂວງ ທີ່ເຂົ້າຮ່ວມກອງປະຊຸມ ລົງມະຕິ.

ຄ. ການປົດຕຳແໜ່ງ

ການປົດຕຳແໜ່ງ ແມ່ນ ການລົງຄະແນນສຽງຂອງສະມາຊິກສະພາປະຊາຊົນຂັ້ນແຂວງ ຕໍ່ບຸກຄະລາກອນ ທີ່ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ຫຼື ຮັບຮອງເອົາການສະເໜີແຕ່ງຕັ້ງ ທີ່ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຕໍ່ຜົນປະໂຫຍດຂອງປະເທດຊາດ ແລະ ປະຊາຊົນ ຕາມການສະເໜີຂອງຜູ້ທີ່ສະເໜີໃຫ້ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ຫຼື ຮັບຮອງເອົາການສະເໜີແຕ່ງຕັ້ງ.

ການປົດຕຳແໜ່ງ ໃຫ້ປະຕິບັດ ດັ່ງນີ້:

1. ຜູ້ທີ່ສະເໜີໃຫ້ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ຫຼື ຮັບຮອງເອົາການສະເໜີແຕ່ງຕັ້ງ ສະເໜີເຫດຜົນ;

2. ສະມາຊິກສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າ, ປະກອບຄຳເຫັນ;

3. ເປົ້າໝາຍທີ່ຖືກສະເໜີ ຊີ້ແຈງ, ອະທິບາຍ;

4. ສະມາຊິກສະພາປະຊາຊົນຂັ້ນແຂວງ ທີ່ເຂົ້າຮ່ວມກອງປະຊຸມ ລົງຄະແນນສຽງ.

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນຜູ້ກຳນົດລະບຽບການກ່ຽວກັບການໃຫ້ຄະແນນ, ການລົງມະຕິບໍ່ໄວ້ວາງໃຈ, ການປົດຕຳແໜ່ງ.

## ໝວດທີ 2

## ການຕິດຕາມກວດກາຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ

**ມາດຕາ 65 (ໃໝ່) ເປົ້າໝາຍ ທີ່ຖືກຕິດຕາມກວດກາ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາເປົ້າໝາຍ ດັ່ງນີ້:

1. ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;

2. ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ, ຫົວໜ້າພະແນກ ແລະ ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ;

3. ຫົວໜ້າອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ;

4. ປະທານ, ຮອງປະທານສານປະຊາຊົນ ແລະ ຜູ້ພິພາກສາ ສານປະຊາຊົນ ແຂວງ, ນະຄອນຫຼວງ, ເຂດ ຫຼື ເມືອງ, ເທດສະບານ, ນະຄອນ;

5. ປະທານ, ຮອງປະທານຄະນະກຳມະການ, ເລຂາທິການ, ຮອງເລຂາທິການສະພາປະຊາຊົນຂັ້ນແຂວງ, ໜ່ວຍສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງ ເມືອງ, ເທດສະບານ, ນະຄອນ, ໜ່ວຍສະມາຊິກສະພາປະຊາຊົນເພດຍິງຂັ້ນແຂວງ;

6. ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ.

**ມາດຕາ 66 (ໃໝ່) ເນື້ອໃນການຕິດຕາມກວດກາຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາຕາມເນື້ອໃນ ດັ່ງນີ້:

1. ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ, ມະຕິຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຂັ້ນແຂວງ ແລະ ໂຄງການກໍ່ສ້າງພື້ນຖານໂຄງລ່າງຂອງທ້ອງຖິ່ນ, ການເຄື່ອນໄຫວຂອງອົງການໄອຍະການປະຊາຊົນ, ສານປະຊາຊົນ;

2. ນິຕິກຳຂອງ ການຈັດຕັ້ງ ຫຼື ບຸກຄະລາກອນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 65 ຂອງກົດໝາຍສະບັບນີ້ ທີ່ເຫັນວ່າຂັດກັບ ກົດໝາຍ ຫຼື ມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ ຍົກເວັ້ນຄຳຕັດສິນ ກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;

3. ການໃຫ້ຄວາມກະຈ່າງແຈ້ງ ຂອງເປົ້າໝາຍທີ່ຖືກຕິດຕາມກວດກາ;

4. ບົດລາຍງານການຕິດຕາມກວດກາ ຂອງຄະນະກຳມະການສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ;

5. ບົດລາຍງານການແກ້ໄຂຄຳຮ້ອງຂໍຄວາມເປັນທຳ;

6. ບົດລາຍງານບັນຫາໃດໜຶ່ງຂອງຄະນະສະເພາະກິດ.

**ມາດຕາ 67 (ໃໝ່) ການສ້າງແຜນການຕິດຕາມກວດກາ**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ສ້າງແຜນການຕິດຕາມກວດກາ ປະຈຳທຸກເດືອນ ແລະ ປະຈຳປີ ໂດຍອີງຕາມແຜນການຕິດຕາມກວດກາ ຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ ແລະ ຕາມການສະເໜີຂອງຄະນະກຳມະການສະພາປະຊາຊົນຂັ້ນແຂວງ, ສະມາຊິກສະພາປະຊາຊົນຂັ້ນແຂວງ, ແນວລາວສ້າງຊາດຂັ້ນແຂວງ. ຫຼັງຈາກແຜນການໄດ້ຖືກຮັບຮອງເອົາແລ້ວ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແບ່ງຄວາມຮັບຜິດຊອບໃຫ້ກຳມະການຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ເພື່ອຈັດຕັ້ງປະຕິບັດ ແລ້ວລາຍງານໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເພື່ອມີວິທີການ ແລະ ມາດຕະການແກ້ໄຂຢ່າງເໝາະສົມ ແລະ ທັນເວລາ.

**ມາດຕາ 68 (ໃໝ່) ການຕິດຕາມກວດກາບົດລາຍງານ ຂອງກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາບົດລາຍງານຂອງເປົ້າໝາຍທີ່ຖືກຕິດຕາມກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 65 ຂອງກົດໝາຍສະບັບນີ້. ຖ້າເຫັນວ່າມີຄວາມຈຳເປັນກໍເຊີນ ການຈັດຕັ້ງ ຫຼື ບຸກຄະລາກອນດັ່ງກ່າວ ມາໃຫ້ຄວາມກະຈ່າງແຈ້ງຕື່ມອີກ.

ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາບົດລາຍງານ ຕາມຂັ້ນຕອນ ດັ່ງນີ້:

1. ການຈັດຕັ້ງ ຫຼື ບຸກຄະລາກອນ ທີ່ກ່ຽວຂ້ອງລາຍງານ;
2. ປະທານຄະນະກຳມະການສະພາປະຊາຊົນຂັ້ນແຂວງ ທີ່ຖືກມອບໝາຍ ມີຄຳເຫັນ;
3. ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າ, ປະກອບຄຳເຫັນ;
4. ຜູ້ລາຍງານ ຊີ້ແຈງ, ອະທິບາຍ;
5. ລົງມະຕິຮັບຮອງເອົາບົດລາຍງານ.

**ມາດຕາ 69 (ໃໝ່) ການຕິດຕາມກວດການິຕິກຳ**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຊຸກຍູ້ໃຫ້ອົງການປົກຄອງ ແຂວງ, ນະຄອນຫຼວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ ອອກນິຕິກຳ ເພື່ອຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ຂັ້ນແຂວງ ໃຫ້ທັນເວລາ ແລະ ຕິດຕາມກວດກາ, ພິຈາລະນານິຕິກຳດັ່ງກ່າວ. ກ່ອນຈະພິຈາລະນາຄະນະປະຈຳສະພາປະຊາຊົນຂັ້ນແຂວງ ມອບນິຕິກຳນັ້ນໃຫ້ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ທີ່ກ່ຽວຂ້ອງຄົ້ນຄວ້າ, ກະກຽມປະກອບຄຳເຫັນເສຍກ່ອນ.

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ສະເໜີໃຫ້ໂຈະການຈັດຕັ້ງປະຕິບັດນິຕິກຳຂອງອົງການລັດຂັ້ນແຂວງ ທີ່ຂັດກັບ ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ ແລະ ມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ ແລ້ວນຳສະເໜີຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ພິຈາລະນາ ຍົກເວັ້ນຄຳຕັດສິນ ກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ.

ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງພິຈາລະນານິຕິກຳ ຕາມຂັ້ນຕອນ ດັ່ງນີ້:

1. ປະທານຄະນະກຳມະການສະພາປະຊາຊົນຂັ້ນແຂວງ ລາຍງານຜົນການຕິດຕາມກວດກາ;

2. ຜູ້ທີ່ອອກນິຕິກຳ ຊີ້ແຈງ, ອະທິບາຍ;

3. ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າ, ມີຄຳເຫັນ;

4. ຜູ້ທີ່ອອກນິຕິກຳ ຊີ້ແຈງ, ອະທິບາຍ ເພີ່ມເຕີມ;

5. ຄະນະປະຈຳສະພາປະຊາຊົນຂັ້ນແຂວງພິຈາລະນາລົງມະຕິຮັບຮອງເອົາບົດລາຍງານຜົນການຕິດຕາມກວດກາ.

**ມາດຕາ 70 (ໃໝ່) ການຕິດຕາມກວດກາການເລືອກຕັ້ງສະມາຊິກສະພາປະຊາຊົນຂັ້ນແຂວງ**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນຜູ້ຕິດຕາມກວດກາການເຄື່ອນໄຫວວຽກງານຂອງຄະນະກຳມະການເລືອກຕັ້ງຂັ້ນທ້ອງຖິ່ນ ເພື່ອເຮັດໃຫ້ການເລືອກຕັ້ງໄດ້ດຳເນີນໄປຢ່າງມີປະຊາທິປະໄຕ, ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 71 (ໃໝ່) ການຕິດຕາມກວດກາການແກ້ໄຂຄຳຮ້ອງທຸກ**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາການແກ້ໄຂຄຳຮ້ອງທຸກຂອງອົງການປົກຄອງ ແຂວງ, ນະຄອນຫຼວງ, ອົງການໄອຍະການປະຊາຊົນ, ສານປະຊາຊົນ ຂັ້ນແຂວງ ໃນການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການແກ້ໄຂຄຳຮ້ອງທຸກ.

ໃນການຕິດຕາມກວດກາ ຖ້າເຫັນວ່າການຈັດຕັ້ງ ແລະ ບຸກຄະລາກອນ ຫາກມີການລະເມີດກົດໝາຍ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ສະເໜີວິທີການ ແລະ ມາດຕະການ ໃຫ້ອົງການທີ່ກ່ຽວຂ້ອງ ແກ້ໄຂຜົນຂອງການຕິດຕາມກວດກາ ຕາມກົດໝາຍ ແລະ ລະບຽບການ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ ແລ້ວຕ້ອງລາຍງານໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໃນການແກ້ໄຂນັ້ນ.

**ມາດຕາ 72 (ໃໝ່) ການແຕ່ງຕັ້ງຄະນະສະເພາະກິດ**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແຕ່ງຕັ້ງຄະນະສະເພາະກິດຂອງຕົນຂຶ້ນ ເພື່ອຕິດຕາມກວດກາລະອຽດ ກ່ຽວກັບບັນຫາໃດໜຶ່ງທີ່ເຫັນວ່າມີຄວາມຈຳເປັນ ຕາມການສະເໜີຂອງຄະນະ

ກຳມະການສະພາປະຊາຊົນ, ສະມາຊິກສະພາປະຊາຊົນ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ຂັ້ນແຂວງ.

ມະຕິແຕ່ງຕັ້ງຄະນະສະເພາະກິດ ປະກອບດ້ວຍ:

1. ເນື້ອໃນຕິດຕາມກວດກາ;

2. ເປົ້າໝາຍຕິດຕາມກວດກາ;

3. ໂຄງປະກອບບຸກຄະລາກອນ ຂອງຄະນະສະເພາະກິດ ປະກອບດ້ວຍ ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານ, ລັດຖະກອນທີ່ກ່ຽວຂ້ອງຈຳນວນໜຶ່ງ;

4. ສິດ ແລະ ໜ້າທີ່ ຂອງຄະນະສະເພາະກິດ ມີ ດັ່ງນີ້:

4.1. ສະເໜີໃຫ້ເປົ້າໝາຍທີ່ຖືກຕິດຕາມກວດກາ ລາຍງານເປັນລາຍລັກອັກສອນ, ສະໜອງຂໍ້ມູນ, ເອກະສານ ທີ່ກ່ຽວຂ້ອງກັບເນື້ອໃນການຕິດຕາມກວດກາ, ຊີ້ແຈງ, ອະທິບາຍບັນຫາທີ່ຄະນະສະເພາະກິດມີຄວາມສົນໃຈ;

4.2. ພິຈາລະນາ, ຕີລາຄາບົດລາຍງານ, ຂໍ້ມູນ, ເອກະສານຂອງເປົ້າໝາຍທີ່ຖືກຕິດຕາມກວດກາ;

4.3. ໃຫ້ຄຳແນະນຳແກ່ເປົ້າໝາຍທີ່ຖືກຕິດຕາມກວດກາ ກ່ຽວກັບການແກ້ໄຂ ເມື່ອເຫັນວ່າມີການລະເມີດກົດໝາຍ, ກໍ່ຄວາມເສຍຫາຍຕໍ່ ຜົນປະໂຫຍດຂອງຊາດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ;

4.4. ສະເໜີຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເພື່ອພິຈາລະນາຕົກລົງໃຫ້ເປົ້າໝາຍດັ່ງກ່າວ ຢຸດເຊົາການລະເມີດກົດໝາຍ ແລະ ຟື້ນຟູສິດ, ຜົນປະໂຫຍດຂອງຊາດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ. ມອບໃຫ້ການຈັດຕັ້ງ ທີ່ມີສິດ, ໜ້າທີ່ ທີ່ກ່ຽວຂ້ອງ ພິຈາລະນາການລົງວິໄນ ແລະ ນຳໃຊ້ມາດຕະການອື່ນຕໍ່ຜູ້ລະເມີດນັ້ນ ຕາມກົດໝາຍ;

4.5. ປະຕິບັດໃຫ້ຖືກຕ້ອງຕາມ ເນື້ອໃນ, ສິດ, ໜ້າທີ່ ທີ່ໄດ້ກຳນົດໄວ້ໃນມະຕິແຕ່ງຕັ້ງຄະນະສະເພາະກິດ ຢ່າງເຂັ້ມງວດ;

4.6. ສົ່ງບົດລາຍງານກ່ຽວກັບຜົນຂອງການຕິດຕາມກວດກາ ໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພາຍໃນເວລາ ສິບວັນ ນັບແຕ່ວັນສິ້ນສຸດການຕິດຕາມກວດກາເປັນຕົ້ນໄປ.

ມະຕິດັ່ງກ່າວຕ້ອງສົ່ງໃຫ້ເປົ້າໝາຍ ທີ່ຖືກຕິດຕາມກວດກາ ແລະ ອົງການທີ່ກ່ຽວຂ້ອງ ເຈັດວັນ ກ່ອນຈະດຳເນີນການຕິດຕາມກວດກາ.

### ມາດຕາ 73 (ໃໝ່) ການພິຈາລະນາບົດລາຍງານຂອງຄະນະສະເພາະກິດ

ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພິຈາລະນາບົດລາຍງານຂອງ ຄະນະສະເພາະກິດ ຕາມຂັ້ນຕອນ ດັ່ງນີ້:

1. ຫົວໜ້າຄະນະສະເພາະກິດລາຍງານ;

2. ເປົ້າໝາຍທີ່ຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍ;

3. ຕົວແທນຂອງການຈັດຕັ້ງ ຫຼື ບຸກຄົນ ທີ່ຖືກເຊີນ ປະກອບຄຳເຫັນ;

4. ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຄົ້ນຄ້ວາ, ມີຄຳເຫັນ;

5. ເປົ້າໝາຍທີ່ຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍເພີ່ມເຕີມ;

6. ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພິຈາລະນາລົງມະຕິຮັບຮອງເອົາບົດລາຍງານຜົນການຕິດຕາມກວດກາ.

**ມາດຕາ 74 (ໃໝ່) ການພິຈາລະນາ ແລະ ແກ້ໄຂ ຜົນຂອງການຕິດຕາມກວດກາ**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພິຈາລະນາ ແລະ ແກ້ໄຂຜົນຂອງການຕິດຕາມກວດກາ ດັ່ງນີ້:

1. ສະເໜີໃຫ້ການຈັດຕັ້ງ ຫຼື ບຸກຄົນ ທີ່ມີ ສິດ, ໜ້າທີ່ ທີ່ກ່ຽວຂ້ອງອອກຄຳສັ່ງໃຫ້ຜູ້ລະເມີດນັ້ນ ຢຸດເຊົາການລະເມີດໂດຍທັນທີ, ໃຫ້ຜູ້ລະເມີດຟື້ນຟູ, ຊົດເຊີຍຄ່າເສຍຫາຍຕໍ່ຜົນປະໂຫຍດຂອງຊາດ, ລວມໝູ່ ຫຼື ສິດ, ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ. ລົງວິໄນຕໍ່ຜູ້ລະເມີດ ຫຼື ນຳໃຊ້ມາດຕະການອື່ນຕາມກົດໝາຍ;

2. ໂຈະການປະຕິບັດນິຕິກຳຂອງອົງການລັດຂັ້ນແຂວງ ທີ່ຂັດກັບລັດຖະທຳມະນູນ, ກົດໝາຍ, ມະຕິ ຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ ຫຼື ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລ້ວລາຍງານໃຫ້ກອງປະຊຸມສະພາປະຊາຊົນຂັ້ນແຂວງພິຈາລະນາຕົກລົງ ກ່ຽວກັບການຍົກເລີກນິຕິກຳນັ້ນ.

## ໝວດທີ 3
## ການຕິດຕາມກວດກາ ຂອງຄະນະກຳມະການສະພາປະຊາຊົນຂັ້ນແຂວງ

**ມາດຕາ 75 (ໃໝ່) ເປົ້າໝາຍທີ່ຖືກຕິດຕາມກວດກາ ຂອງຄະນະກຳມະການສະພາປະຊາຊົນຂັ້ນແຂວງ**

ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາເປົ້າໝາຍ ຕາມມະຕິຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ດັ່ງນີ້:

1. ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ;

2. ຫົວໜ້າອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ;

3. ປະທານສານປະຊາຊົນ ແຂວງ, ນະຄອນຫຼວງ, ເຂດ ຫຼື ເມືອງ, ເທດສະບານ, ນະຄອນ.

**ມາດຕາ 76 (ໃໝ່) ເນື້ອໃນການຕິດຕາມກວດກາ**

ການຕິດຕາມກວດກາ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ບົດລາຍງານ ການຈັດຕັ້ງ ແລະ ເຄື່ອນໄຫວຂອງ ບັນດາເປົ້າໝາຍທີ່ຖືກຕິດຕາມກວດກາ ທີ່ຄະນະກຳມະການຕົນຮັບຜິດຊອບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 75 ຂອງກົດໝາຍສະບັບນີ້;

2. ນິຕິກຳຂອງ ການຈັດຕັ້ງ ຫຼື ບຸກຄະລາກອນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 75 ຂອງກົດໝາຍສະບັບນີ້ ຍົກເວັ້ນຄຳຕັດສິນກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;

3. ບົດລາຍງານຂອງໜ່ວຍງານສະເພາະກິດ;

4. ການໃຫ້ຄວາມກະຈ່າງແຈ້ງຂອງເປົ້າໝາຍທີ່ຖືກຕິດຕາມກວດກາ.

**ມາດຕາ 77 (ໃໝ່) ການສ້າງແຜນການຕິດຕາມກວດກາຂອງຄະນະກຳມະການສະພາປະຊາຊົນຂັ້ນແຂວງ**

ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ສ້າງແຜນການຕິດຕາມກວດກາຂອງຕົນ ເປັນແຕ່ລະໄລຍະ ໂດຍອີງຕາມແຜນການຕິດຕາມກວດກາຂອງ ກອງປະຊຸມສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ຄຳສະເໜີຂອງກຳມະການສັງກັດຄະນະກຳມະການ. ຫຼັງຈາກແຜນການໄດ້ຖືກຮັບຮອງເອົາແລ້ວ ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ຕ້ອງແບ່ງຄວາມຮັບຜິດຊອບໃຫ້ກຳມະການສັງກັດຄະນະກຳມະການຂອງຕົນ ເພື່ອຈັດຕັ້ງປະຕິບັດ.

**ມາດຕາ 78 (ໃໝ່) ການຕິດຕາມກວດກາບົດລາຍງານ**

ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາບົດລາຍງານຂອງເປົ້າໝາຍທີ່ຖືກຕິດຕາມກວດກາ. ຖ້າເຫັນວ່າມີຄວາມຈຳເປັນກໍເຊີນ ການຈັດຕັ້ງ ຫຼື ບຸກຄະລາກອນ ດັ່ງກ່າວມາໃຫ້ຄວາມກະຈ່າງແຈ້ງ ຕາມຂັ້ນຕອນ ດັ່ງນີ້.

1. ການຈັດຕັ້ງ ຫຼື ບຸກຄະລາກອນ ທີ່ກ່ຽວຂ້ອງລາຍງານ;

2. ປະທານຄະນະກຳມະການ ມີຄຳເຫັນ;

3. ຄະນະກຳມະການ ຄົ້ນຄວ້າ, ປະກອບຄຳເຫັນ;

4. ຜູ້ລາຍງານ ຊີ້ແຈງ, ອະທິບາຍ;

5. ລົງມະຕິຮັບຮອງເອົາບົດລາຍງານ.

ໃນກໍລະນີຫາກເຫັນວ່າ ບົດລາຍງານດັ່ງກ່າວ ມີການລະເມີດກົດໝາຍ ແລະ ລະບຽບການ, ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ມີສິດສະເໜີໃຫ້ອົງການດັ່ງກ່າວແກ້ໄຂ ແລະ ແຈ້ງໃຫ້ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ. ຖ້າຫາກບໍ່ມີການແກ້ໄຂ ຫຼື ແກ້ໄຂບໍ່ເໝາະສົມ ກໍໃຫ້ລາຍງານຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພິຈາລະນາແກ້ໄຂ.

**ມາດຕາ 79 (ໃໝ່) ການຕິດຕາມກວດການິຕິກຳ**

ຄະນະຄະນະກຳມະການສະພາປະຊາຊົນຂັ້ນແຂວງ ຕິດຕາມກວດການິຕິກຳ ຕາມຂັ້ນຕອນ ດັ່ງນີ້:

1. ຜູ້ອອກນິຕິກຳ ຊີ້ແຈງ, ອະທິບາຍ;
2. ປະທານຄະນະກຳມະການ ມີຄຳເຫັນ;
3. ຄະນະກຳມະການ ຄົ້ນຄວ້າ, ປະກອບຄຳເຫັນ;
4. ຜູ້ອອກນິຕິກຳ ຊີ້ແຈງ, ອະທິບາຍ ເພີ່ມເຕີມ;
5. ລົງມະຕິຮັບຮອງເອົາຜົນການຕິດຕາມກວດກາ.

ໃນກໍລະນີເຫັນວ່າ ນິຕິກຳດັ່ງກ່າວ ຂັດກັບກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ, ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ມີສິດສະເໜີໃຫ້ອົງການດັ່ງກ່າວແກ້ໄຂ ແລະ ແຈ້ງໃຫ້ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີ ເປັນຕົ້ນໄປ. ຖ້າຫາກບໍ່ມີການແກ້ໄຂ ຫຼື ແກ້ໄຂບໍ່ເໝາະສົມ ກໍໃຫ້ລາຍງານຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພິຈາລະນາແກ້ໄຂ.

**ມາດຕາ 80 (ໃໝ່) ການແຕ່ງຕັ້ງໜ່ວຍງານສະເພາະກິດ**

ເມື່ອມີຄວາມຈຳເປັນ ຫຼື ຕາມການມອບໝາຍ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ອອກຂໍ້ຕົກລົງແຕ່ງຕັ້ງໜ່ວຍງານສະເພາະກິດຂຶ້ນ ເພື່ອຕິດຕາມກວດກາລະອຽດກ່ຽວກັບບັນຫາໃດໜຶ່ງ. ສຳລັບໂຄງປະກອບຂອງຂໍ້ຕົກລົງໃຫ້ປະຕິບັດຄືກັນກັບໂຄງປະກອບຂອງມະຕິແຕ່ງຕັ້ງຄະນະສະເພາະກິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 72 ຂອງກົດໝາຍສະບັບນີ້.

**ມາດຕາ 81 (ໃໝ່) ການພິຈາລະນາບົດລາຍງານຂອງໜ່ວຍງານສະເພາະກິດ**

ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ເປີດກອງປະຊຸມຂອງຕົນຂຶ້ນ ເພື່ອຄົ້ນຄວ້າພິຈາລະນາບົດລາຍງານຂອງໜ່ວຍງານສະເພາະກິດ ຕາມຂັ້ນຕອນ ດັ່ງນີ້:

1. ຫົວໜ້າໜ່ວຍງານ ລາຍງານ;
2. ເປົ້າໝາຍທີ່ຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍ;
3. ກອງປະຊຸມ ຄົ້ນຄວ້າ, ປະກອບຄຳເຫັນ;
4. ເປົ້າໝາຍທີ່ຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍ ເພີ່ມເຕີມ;
5. ປະທານກອງປະຊຸມສະຫຼຸບ, ຫຼັງຈາກນັ້ນ ກຳມະການສັງກັດຄະນະກຳມະການທີ່ເຂົ້າຮ່ວມກອງປະຊຸມ ລົງມະຕິຮັບຮອງເອົາບົດລາຍງານ;
6. ລາຍງານຜົນຂອງກອງປະຊຸມ ໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພ້ອມທັງແຈ້ງໃຫ້ການຈັດຕັ້ງ ແລະ ບຸກຄົນ ທີ່ກ່ຽວຂ້ອງ ຮັບຊາບ.

ມາດຕາ 82 (ໃໝ່) ການພິຈາລະນາ ແລະ ແກ້ໄຂ ຜົນຂອງການຕິດຕາມກວດກາຂອງໜ່ວຍງານສະເພາະກິດ

ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ພິຈາລະນາ ແລະ ແກ້ໄຂຜົນຂອງການຕິດຕາມກວດກາຂອງໜ່ວຍງານສະເພາະກິດ ດ້ວຍການສະເໜີໃຫ້ການຈັດຕັ້ງ ຫຼື ບຸກຄົນ ທີ່ມີ ສິດ, ໜ້າທີ່ ທີ່ກ່ຽວຂ້ອງອອກຄຳສັ່ງໂຈະການຈັດຕັ້ງປະຕິບັດນິຕິກຳທີ່ບໍ່ຖືກຕ້ອງ ແລະ ຢຸດເຊົາການກະທຳ ທີ່ເປັນການລະເມີດກົດໝາຍ, ລະບຽບການ ແລະ ລາຍງານ ໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເພື່ອມີມາດຕະການ ແລະ ວິທີການແກ້ໄຂ.

## ໝວດທີ 4
## ການຕິດຕາມກວດກາຂອງກົງຈັກທີ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງສ້າງຕັ້ງ

ມາດຕາ 83 (ໃໝ່) ການຕິດຕາມກວດກາຂອງໜ່ວຍສະມາຊິກສະພາປະຊາຊົນເພດຍິງຂັ້ນແຂວງ

ໜ່ວຍສະມາຊິກສະພາປະຊາຊົນເພດຍິງຂັ້ນແຂວງ ຈັດຕັ້ງປະຕິບັດຕາມແຜນການຕິດຕາມກວດກາຂອງສະພາປະຊາຊົນຂັ້ນແຂວງ, ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ, ມະຕິຂອງກອງປະຊຸມຄົບຄະນະສະມາຊິກສະພາແຫ່ງຊາດເພດຍິງ, ມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ, ມະຕິຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ນິຕິກຳລຸ່ມກົດໝາຍ;

2. ການຈັດຕັ້ງປະຕິບັດ ຄວາມສະເໝີພາບຍິງ-ຊາຍ, ການພັດທະນາ, ການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ຍິງ ແລະ ເດັກ, ການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ;

3. ການແກ້ໄຂຄຳຮ້ອງທຸກ ທີ່ພົວພັນກັບວຽກງານແມ່ຍິງ ແລະ ເດັກ;

4. ເນື້ອໃນອື່ນ ຕາມການມອບໝາຍຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

5. ເຊີນພາກສ່ວນທີ່ກ່ຽວຂ້ອງມາລາຍງານ, ຕອບຄຳຊັກຖາມຕໍ່ບາງບັນຫາທີ່ມີຄວາມສົນໃຈ. ລາຍງານຜົນຂອງການຕິດຕາມກວດກາຕໍ່ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ມາດຕາ 84 (ໃໝ່) ການຕິດຕາມກວດກາຂອງໜ່ວຍສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງ ເມືອງ, ເທດສະບານ, ນະຄອນ

ໜ່ວຍສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງ ເມືອງ, ເທດສະບານ, ນະຄອນ ຈັດຕັ້ງປະຕິບັດຕາມແຜນການ ຕິດຕາມກວດກາຂອງສະພາປະຊາຊົນຂັ້ນແຂວງ, ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

ລາຍງານຜົນຂອງການຕິດຕາມກວດກາຕໍ່ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

## ໝວດທີ 5
## ການຕິດຕາມກວດກາຂອງສະມາຊິກສະພາປະຊາຊົນຂັ້ນແຂວງ

**ມາດຕາ 85 (ໃໝ່) ການຕິດຕາມກວດກາຂອງສະມາຊິກສະພາປະຊາຊົນຂັ້ນແຂວງ**

ສະມາຊິກສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາຕາມເນື້ອໃນຕົ້ນຕໍ ດັ່ງນີ້:

1. ບົດລາຍງານຂອງພາກສ່ວນຕ່າງໆ ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ;
2. ຕັ້ງຄຳຊັກຖາມ ຕໍ່ເປົ້າໝາຍທີ່ຖືກຕິດຕາມກວດກາ;
3. ນິຕິກຳຂອງອົງການລັດຂັ້ນທ້ອງຖິ່ນຕົນ ຍົກເວັ້ນຄຳຕັດສິນ ກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;
4. ການແກ້ໄຂຄຳຮ້ອງທຸກ;
5. ຕິດຕາມກວດກາຕາມການມອບໝາຍ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ລາຍງານຜົນຂອງການຕິດຕາມກວດກາຕໍ່ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

**ມາດຕາ 86 (ໃໝ່) ການສ້າງ ແລະ ປະຕິບັດແຜນການຕິດຕາມກວດກາ**

ສະມາຊິກສະພາປະຊາຊົນຂັ້ນແຂວງ ສ້າງແຜນການ, ຕາຕະລາງ ການເຄື່ອນໄຫວວຽກງານຕິດຕາມກວດກາຂອງຕົນ ໂດຍອີງຕາມແຜນການຂອງ ກອງປະຊຸມສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ຄະນະກຳມະການສະພາປະຊາຊົນຂັ້ນແຂວງ.

ນອກຈາກດຳເນີນການຕິດຕາມກວດກາດ້ວຍຕົນເອງແລ້ວ ສະມາຊິກສະພາປະຊາຊົນຂັ້ນແຂວງ ກໍມີສິດ, ໜ້າທີ່ເຂົ້າຮ່ວມການເຄື່ອນໄຫວຕິດຕາມກວດກາຂອງ ຄະນະກຳມະການສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ກອງປະຊຸມສະພາປະຊາຊົນຂັ້ນແຂວງ.

ສຳລັບສະມາຊິກສະພາປະຊາຊົນຂັ້ນແຂວງ ຜູ້ທີ່ຄວບຕຳແໜ່ງ ໃຫ້ແບ່ງເວລາເຄື່ອນໄຫວວຽກງານຕິດຕາມກວດກາຢ່າງໜ້ອຍ ໜຶ່ງສ່ວນສາມ ຂອງເວລາເຮັດວຽກທັງໝົດ.

**ມາດຕາ 87 (ໃໝ່) ການເຄື່ອນໄຫວຕິດຕາມກວດກາ**

ສະມາຊິກສະພາປະຊາຊົນຂັ້ນແຂວງ ເຄື່ອນໄຫວຕິດຕາມກວດກາ ດັ່ງນີ້:

1. ເຂົ້າຮ່ວມການຄົ້ນຄວ້າ, ປະກອບຄຳເຫັນ, ພິຈາລະນາບົດລາຍງານ, ນິຕິກຳຂອງອົງການລັດຂັ້ນທ້ອງຖິ່ນຕົນ ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະກຳມະການສະພາປະຊາຊົນຂັ້ນແຂວງ;
2. ເຂົ້າຮ່ວມໃນຄະນະສະເພາະກິດ ຫຼື ໜ່ວຍງານສະເພາະກິດຕາມການແຕ່ງຕັ້ງ;

3. ຕິດຕາມກວດກາຕາມແຜນການຂອງຕົນ.

**ມາດຕາ 88 (ໃໝ່) ການຊັກຖາມຢູ່ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ**

ສະມາຊິກສະພາປະຊາຊົນຂັ້ນແຂວງ ຊັກຖາມຄະນະປະຈຳ, ປະທານ, ຮອງປະທານຄະນະກຳມະການ ແລະ ເລຂາທິການ ສະພາປະຊາຊົນຂັ້ນແຂວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ, ຫົວໜ້າອົງການໄອຍະການປະຊາຊົນ, ສານປະຊາຊົນ ຂັ້ນແຂວງ.

ຄຳຊັກຖາມຕ້ອງກະທັດຮັດ, ຈະແຈ້ງ, ມີບ່ອນອີງ ແລະ ຕ້ອງຕິດພັນກັບ ສິດ, ໜ້າທີ່, ຄວາມຮັບຜິດຊອບຂອງຜູ້ທີ່ຖືກຊັກຖາມ, ອາດຊັກຖາມດ້ວຍ ປາກເປົ່າ ຫຼື ລາຍລັກອັກສອນ.

ຜູ້ທີ່ຖືກຊັກຖາມນັ້ນ ຕ້ອງຕອບໃຫ້ ຈະແຈ້ງ, ກະທັດຮັດ ແລະ ຖືກກັບຄຳຊັກຖາມ.

**ມາດຕາ 89 (ໃໝ່) ການຕິດຕາມກວດການິຕິກຳ**

ສະມາຊິກສະພາປະຊາຊົນຂັ້ນແຂວງ ເຂົ້າຮ່ວມຄົ້ນຄວ້າ, ປະກອບຄຳເຫັນ ແລະ ພິຈາລະນານິຕິກຳ ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄົບຄະນະຂອງຄະນະກຳມະການສະພາປະຊາຊົນຂັ້ນແຂວງ.

**ມາດຕາ 90 (ໃໝ່) ການຕິດຕາມກວດກາ ກ່ຽວກັບການແກ້ໄຂຄຳຮ້ອງທຸກ**

ສະມາຊິກສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ຮັບຕ້ອນ ແລະ ໃຫ້ຄຳປຶກສາແກ່ປະຊາຊົນ, ຮັບຄຳຮ້ອງທຸກຂອງ ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເພື່ອສະເໜີໃຫ້ພາກສ່ວນ ກ່ຽວຂ້ອງພິຈາລະນາ, ແກ້ໄຂ ແລະ ຕິດຕາມກວດກາຜົນການແກ້ໄຂຄຳຮ້ອງທຸກດັ່ງກ່າວ.

**ມາດຕາ 91 (ໃໝ່) ການລາຍງານຜົນຂອງການຕິດຕາມກວດກາ**

ພາຍຫຼັງທີ່ໄດ້ເຄື່ອນໄຫວຕິດຕາມກວດກາແລ້ວ ສະມາຊິກສະພາປະຊາຊົນຂັ້ນແຂວງ ຕ້ອງລາຍງານຜົນຂອງການຕິດຕາມກວດການັ້ນ ໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ຄະນະກຳມະການຂອງສະພາປະຊາຊົນຂັ້ນແຂວງ ທີ່ຕົນສັງກັດເປັນລາຍລັກອັກສອນ.

**ມາດຕາ 92 (ໃໝ່) ການກວດກາຂອງປະຊາຊົນ**

ແນວລາວສ້າງຊາດ, ການຈັດຕັ້ງມະຫາຊົນ, ການຈັດຕັ້ງສັງຄົມ ທຸກຂັ້ນ ແລະ ປະຊາຊົນລາວບັນດາເຜົ່າ ຕິດຕາມກວດກາສະມາຊິກສະພາປະຊາຊົນຂັ້ນແຂວງ ໂດຍຮັບຟັງການລາຍງານ ການເຄື່ອນໄຫວວຽກງານຂອງສະມາຊິກສະພາປະຊາຊົນຂັ້ນແຂວງ ໃນເຂດເລືອກຕັ້ງຂອງຕົນ ຢ່າງໜ້ອຍປີລະສອງເທື່ອ.

ການກວດກາຂອງປະຊາຊົນ ດຳເນີນດ້ວຍການຮັບຟັງຈາກການປະກອບຄຳເຫັນ ຂອງສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງຂອງຕົນ ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ.

## ພາກທີ IV
## ການອຳນວຍຄວາມສະດວກ
## ໃຫ້ແກ່ວຽກງານຕິດຕາມກວດກາຂອງ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ

### ມາດຕາ 93 (ປັບປຸງ) **ຄະນະເລຂາທິການ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ**

ຄະນະເລຂາທິການ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ມີໜ້າທີ່ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອຳນວຍຄວາມສະດວກທາງດ້ານງົບປະມານ, ພາຫະນະ, ອຸປະກອນ ແລະ ຂໍ້ມູນ ຂ່າວສານຕ່າງໆ ທີ່ຈຳເປັນ ໃຫ້ແກ່ກອງປະຊຸມວຽກງານຕິດຕາມກວດກາຢູ່ໃນຄວາມຮັບຜິດຊອບຂັ້ນຂອງຕົນ.

### ມາດຕາ 94 **ພັນທະຂອງ ອົງການຈັດຕັ້ງ ແລະ ພົນລະເມືອງ**

ອົງການຈັດຕັ້ງ ພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ພົນລະເມືອງທຸກຄົນ ມີພັນທະປະກອບສ່ວນ, ອຳນວຍຄວາມສະດວກໃຫ້ແກ່ການຕິດຕາມກວດກາຂອງ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ເປັນຕົ້ນ ສະໜອງຂໍ້ມູນ ຂ່າວສານ, ໃຫ້ການຊ່ວຍເຫຼືອດ້ານຕ່າງໆ.

## ພາກທີ V
## ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງເປົ້າໝາຍທີ່ຖືກຕິດຕາມກວດກາ

### ມາດຕາ 95 **ສິດຂອງເປົ້າໝາຍທີ່ຖືກຕິດຕາມກວດກາ**

ເປົ້າໝາຍທີ່ຖືກຕິດຕາມກວດກາ ມີ ສິດ ດັ່ງນີ້:

1. ໄດ້ຮັບການແຈ້ງການກ່ອນ ກ່ຽວກັບເນື້ອໃນ ແລະ ເວລາຂອງການຕິດຕາມກວດກາ, ຄຳຊັກຖາມທີ່ຈະຕ້ອງໄດ້ຕອບ;

2. ຊີ້ແຈງ, ອະທິບາຍ ກ່ຽວກັບບັນຫາທີ່ພົວພັນເຖິງສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ;

3. ສະເໜີຕໍ່ ຄະນະປະຈຳສະພາແຫ່ງຊາດ ຫຼື ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພິຈາລະນາຄືນ ກ່ຽວກັບການຕົກລົງໃນການຕິດຕາມກວດກາ ໃນກໍລະນີທີ່ຜູ້ຖືກຕິດຕາມກວດກາຫາກບໍ່ເຫັນດີ.

ມາດຕາ 96 (ປັບປຸງ) ໜ້າທີ່ ແລະ ຄວາມຮັບຜິດຊອບຂອງເປົ້າໝາຍທີ່ຖືກຕິດຕາມກວດກາ

ເປົ້າໝາຍທີ່ຖືກຕິດຕາມກວດກາ ມີ ໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້:

1. ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກແກ່ການຕິດຕາມກວດກາ ດ້ວຍການສະໜອງຂໍ້ມູນ ຂ່າວສານ, ເອກະສານຕ່າງໆ ໃຫ້ທັນເວລາ, ໃຫ້ຄຳຊີ້ແຈງ, ອະທິບາຍ ຕາມການສະເໜີຂອງກອງປະຊຸມສະພາແຫ່ງຊາດ, ຂອງກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ຂອງກອງປະຊຸມກຳມາທິການສະພາແຫ່ງຊາດ, ຂອງສະມາຊິກສະພາແຫ່ງຊາດ; ກອງປະຊຸມສະພາປະຊາຊົນຂັ້ນແຂວງ, ຂອງກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ຂອງກອງປະຊຸມຄະນະກຳມະການສະພາປະຊາຊົນຂັ້ນແຂວງ ແລະ ຂອງສະມາຊິກສະພາປະຊາຊົນຂັ້ນແຂວງ;

2. ສົ່ງນິຕິກຳຂອງຕົນໃຫ້ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ຕາມເປົ້າໝາຍທີ່ຕົນຖືກຕິດຕາມກວດກາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ພາຍໃນເວລາ ເຈັດວັນ, ນັບແຕ່ວັນລົງລາຍເຊັນປະກາດໃຊ້ເປັນຕົ້ນໄປ;

3. ຊີ້ແຈງ, ອະທິບາຍດ້ວຍຕົນເອງ ກ່ຽວກັບບັນຫາທີ່ກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມກຳມາທິການສະພາແຫ່ງຊາດ, ກອງປະຊຸມຄະນະສະມາຊິກສະພາແຫ່ງຊາດເພດຍິງ, ກອງປະຊຸມຄະນະຮັບຜິດຊອບວຽກງານເຂດເລືອກຕັ້ງ, ກອງປະຊຸມຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ; ກອງປະຊຸມສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະກຳມະການສະພາປະຊາຊົນຂັ້ນແຂວງ, ກອງປະຊຸມໜ່ວຍສະມາຊິກສະພາປະຊາຊົນເພດຍິງຂັ້ນແຂວງ, ກອງປະຊຸມໜ່ວຍສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງ ເມືອງ, ເທດສະບານ, ນະຄອນ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ມີຄວາມສົນໃຈ; ໃນກໍລະນີທີ່ຈະມອບສິດໃຫ້ຜູ້ອື່ນຂຶ້ນຊີ້ແຈງ, ອະທິບາຍແທນນັ້ນ ຕ້ອງໄດ້ຮັບການເຫັນດີຈາກກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມກຳມາທິການສະພາແຫ່ງຊາດ; ກອງປະຊຸມສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະກຳມະການສະພາປະຊາຊົນຂັ້ນແຂວງ ເສຍກ່ອນ;

4. ປະຕິບັດຄຳແນະນຳ, ຄຳສະເໜີ ແລະ ມະຕິ ຫຼື ຂໍ້ຕົກລົງ ກ່ຽວກັບວິທີການ ແລະ ມາດຕະການແກ້ໄຂຜົນຂອງການຕິດຕາມກວດກາຂອງກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມກຳມາທິການສະພາແຫ່ງຊາດ; ກອງປະຊຸມສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະກຳມະການສະພາປະຊາຊົນຂັ້ນແຂວງ ຢ່າງເຂັ້ມງວດ ແລະ ທັນເວລາ.

ມາດຕາ 97 (ໃໝ່) ການແກ້ໄຂຜົນການຕິດຕາມກວດກາຂອງເປົ້າໝາຍທີ່ຖືກຕິດຕາມກວດກາ

ເປົ້າໝາຍທີ່ຖືກຕິດຕາມກວດກາ ຕ້ອງແກ້ໄຂຜົນຂອງການຕິດຕາມກວດກາ ດັ່ງນີ້:

1. ຢຸດເຊົາການກະທຳທີ່ເປັນການລະເມີດ ລັດຖະທຳມະນູນ, ກົດໝາຍ, ມະຕິຂອງ ກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ມະຕິຂອງ ກອງປະຊຸມສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະປະຈຳພາປະຊາຊົນຂັ້ນແຂວງ;

2. ປັບປຸງ ຫຼື ຍົກເລີກ ນິຕິກຳລຸ່ມກົດໝາຍ ທີ່ຂັດກັບລັດຖະທຳມະນູນ ແລະ ກົດໝາຍ;

3. ແກ້ໄຂບັນຫາ ແລະ ປະຕິບັດຕາມຄຳແນະນຳ ຂອງຄະນະກວດກາ;

4. ລາຍງານຜົນການແກ້ໄຂຕໍ່ ຄະນະກວດກາແຕ່ລະຂັ້ນ ຂອງສະພາແຫ່ງຊາດ ແລະ ຂອງສະພາປະຊາຊົນຂັ້ນແຂວງ.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 98 (ໃໝ່) ຂໍ້ຫ້າມ ສຳລັບຜູ້ຕິດຕາມກວດກາ**

ຫ້າມຜູ້ຕິດຕາມກວດກາ ມີ ພຶດຕິກຳ ດັ່ງນີ້:

1. ສວຍໃຊ້ຕຳແໜ່ງ, ໜ້າທີ່, ສິດອຳນາດ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ຫຼື ຍາດພີ່ນ້ອງ;

2. ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ໃນການຕິດຕາມກວດກາເກີນຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ບັງຄັບ ແລະ ນາບຂູ່ ເປົ້າໝາຍຖືກກວດກາ;

4. ເມີນເສີຍຕໍ່ໜ້າທີ່, ບິດເບືອນຄວາມຈິງ, ປົດບັງ ຫຼື ປົກປ້ອງເປົ້າໝາຍທີ່ຖືກກວດກາ;

5. ເປີດເຜີຍຄວາມລັບ ກ່ຽວກັບການຕິດຕາມກວດກາ ໂດຍບໍ່ໄດ້ຮັບອະນຸຍາດ;

6. ພົວພັນກັບເປົ້າໝາຍທີ່ຖືກຕິດຕາມກວດກາ ເພື່ອຫາຜົນປະໂຫຍດ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 99 (ໃໝ່) ຂໍ້ຫ້າມ ສຳລັບເປົ້າໝາຍຖືກຕິດຕາມກວດກາ**

ຫ້າມ ເປົ້າໝາຍທີ່ຖືກຕິດຕາມກວດກາ ມີ ພຶດຕິກຳ ດັ່ງນີ້ :

1. ປະຕິເສດການສະໜອງ ຂໍ້ມູນ, ເອກະສານ ກ່ຽວກັບການຕິດຕາມກວດກາ;

2. ລາຍງານ, ສະໜອງຂໍ້ມູນ, ເອກະສານ ບໍ່ຖືກກັບຄວາມຈິງ; ຊຸກເຊື່ອງ, ທຳລາຍເອກະສານ, ວັດຖຸສິ່ງຂອງ ຊຶ່ງເປັນຫຼັກຖານ ທີ່ພົວພັນເຖິງການຕິດຕາມກວດກາ;

3. ຂັດຂວາງ, ສ້າງຄວາມຫຍຸ້ງຍາກ, ນາບຂູ່ ຄະນະຕິດຕາມກວດກາ, ພະນັກງານ-ລັດຖະກອນ, ຜູ້ສະໜອງຂໍ້ມູນ ໃຫ້ແກ່ການຕິດຕາມກວດກາ ຫຼື ບຸກຄົນອື່ນ ທີ່ກ່ຽວຂ້ອງ;

4. ຊື້ຈ້າງ, ໃຫ້ສິນບົນຄະນະຕິດຕາມກວດກາ, ພະນັກງານ-ລັດຖະກອນ, ຜູ້ສະໜອງຂໍ້ມູນ ກ່ຽວກັບການຕິດຕາມກວດກາ ຫຼື ບຸກຄົນອື່ນ ທີ່ກ່ຽວຂ້ອງ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 100 (ໃໝ່) ຂໍ້ຫ້າມສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ມີພຶດຕິກຳ ດັ່ງນີ້:

1. ຍຸຍົງໃຫ້ມີການຕິດຕາມກວດກາ ຫຼື ໃຫ້ມີການຕ້ານການຕິດຕາມກວດກາ;
2. ແຊກແຊງ, ກ້າວກ່າຍ ແລະ ຂັດຂວາງ ການຕິດຕາມກວດກາ;
3. ປົກປິດ, ເຊື່ອງອຳ ຫຼື ທຳລາຍຂໍ້ມູນ, ຫຼັກຖານ ກ່ຽວກັບການຕິດຕາມກວດກາ;
4. ໃຊ້ຄວາມຮຸນແຮງ, ນາບຂູ່ ຫຼື ທຳຮ້າຍ ຜູ້ຕິດຕາມກວດກາ, ຜູ້ໃຫ້ຂໍ້ມູນ ຫຼື ບຸກຄົນອື່ນ ທີ່ກ່ຽວຂ້ອງ;
5. ປົກປ້ອງ, ຊຸກເຊື່ອງ ບຸກຄົນທີ່ຖືກຕິດຕາມກວດກາ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

## ພາກທີ VII
## ນະໂຍບາຍ ຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 101 (ໃໝ່) ນະໂຍບາຍຕໍ່ຜູ້ມີຜົນງານ**

ຜູ້ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການປົກປ້ອງ, ການຍ້ອງຍໍ ແລະ ປະຕິບັດນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 102 (ໃໝ່) ມາດຕະການຕໍ່ຜູ້ລະເມີດ**

ຜູ້ທີ່ລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳໄວ້ໃນກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ກ່າວເຕືອນ, ປັບໃໝ, ລົງວິໄນ, ທົດແທນຄ່າເສຍຫາຍ ຫຼື ລົງໂທດທາງອາຍາ ຕາມແຕ່ລະກໍລະນີເບົາ ຫຼື ໜັກ.

# ພາກທີ VIII
# ບົດບັນຍັດສຸດທ້າຍ

**ມາດຕາ 103 ການຈັດຕັ້ງປະຕິບັດ**

ຄະນະປະຈຳສະພາແຫ່ງຊາດ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 104 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ສະບັບເລກທີ 09/ສພຊ, ລົງວັນທີ 22 ຕຸລາ 2004.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້